GCI

# ບົດຮຽນ ທີ 9
# ສົງຄາມຝ່າຍວິນຍານ

**ຄໍາແນະນໍາ:**

ຈຸດປະສົງຂອງບົດຮຽນ:
- ເພື່ອເຮັດຄວາມເຂົ້າໃຈກັບຂໍ້ພະຄໍາພີທີ່ສໍາຄັນ ທີ່ກ່າວກ່ຽວກັບສົງຄາມຝ່າຍວິນຍານ.
- ເພື່ອຄົ້ນພົບແຜນການ ແລະ ຂັ້ນຕອນຕ່າງໆ ຂອງສັດຕູຂອງພວກເຮົາ.
- ເພື່ອຮຽນຮູ້ການຕຽມຕົວເໝືອນຢ່າງທະຫານທີ່ຈະອອກເສິກ.
- ເພື່ອຄົ້ນພົບອາວຸດຂອງພວກເຮົາ ແລະ ການນໍາໃຊ້.

**ໂຄງຮ່າງຂອງບົດຮຽນ**

I. ພາກສະເໜີ: ປະຫວັດສາດຂອງການເຮັດເສິກ
   ກ. ໃນຕອນຕົ້ນ - ສິ່ງຊົງສ້າງທັງປວງເປັນຂອງພະເຈົ້າ.
   ຂ. ມະນຸດໄດ້ຮັບສິດປົກຄອງເໜືອແຜ່ນດິນໂລກ.

II. ໄຊຊະນະອັນສະຫງ່າງາມ
   ກ. ການຊົງເສຍສະຫລະພະອົງເອງ (ໃໝ່)
   ຂ. ຊາຕານແມ່ນຜູ້ປົກຄອງລາຊະອານາຈັກຕ່າງໆໃນໂລກນີ້
   ຄ. ຜູ້ປົກຄອງໂລກນີ້ຈະຖືກຂັບໄລ່ອອກ
   ງ. ໄຊຊະນະ
   ຈ. ການສິ້ນພະຊົນຂອງພະເຍຊູໄດ້ປົດຜູ້ທີ່ມີອໍານາດແຫ່ງຄວາມຕາຍລົງ.

III. ສະພາບການໃນປັດຈຸບັນ
   ກ. ຊົງຖືກຍົກຂຶ້ນ ແລະ ໄດ້ຮັບພະລາຊະທານລິດອໍານາດທັງປວງ.
   ຂ. ພວກເຮົາຍັງບໍ່ເຫັນວ່າສິ່ງທັງປວງຢູ່ໃຕ້ອໍານາດຂອງພະອົງເທື່ອ.
   ຄ. ກໍາລັງລໍຖ້າ . . . ຈົນກວ່າ.
   ງ. ອານາຈັກຕ່າງໆຍັງຮົບເສິກກັນຢູ່ - ຍັງສູ້ຮົບຢ່າງຮຸນແຮງ.
   ຈ. ຄຣິສຕະຈັກ.
   ສ. ຄໍາຖາມ:

IV. ຂັ້ນຕອນ ຫລື ແຜນຂອງສັດຕູ
   ກ. ຂັດຂວາງຊີວິດ ແລະ ພັນທະກິດຂອງຜູ້ທີ່ເຊື່ອ.
   ຂ. ສ້າງຕັ້ງປ້ອມທີ່ໝັ້ນ - ເຂດປົກຄອງ ຫລື ພື້ນທີ່ຄວບຄຸມຂອງມັນ.

V. ສົງຄາມຂອງພວກເຮົາ
   ກ. ສິ່ງທໍາອິດ - ມັດຄົນທີ່ແຂງແຮງ.
   ຂ. ວິນຍານຊົ່ວຖືກຜູກມັດ ຫາກເຮົາເຊື່ອຟັງພະອົງ.
   ຄ. ຈົ່ງສວມຍຸດທະພັນຄົບຊຸດຊຶ່ງມາຈາກພະເຈົ້າ.
   ງ. ອາວຸດຝ່າຍວິນຍານຂອງພວກເຮົາສໍາລັບການຮົບເສິກ

VI. ພາກປະຕິບັດ

GCI

# I. ຄຳແນະນຳ: ປະຫວັດສາດຂອງສົງຄາມ

## *ກ. ໃນຕອນຕົ້ນ - ສິ່ງຊົງສ້າງທັງປວງ<u>ເປັນຂອງ</u>ພະເຈົ້າ*

**ປະຖົມມະການ 1:1**
*1 ເມື່ອພະເຈົ້າເລີ່ມຕົ້ນນິລະມິດສ້າງ ແຜ່ນດິນໂລກກັບທຸກໆສິ່ງໃນທ້ອງຟ້ານັ້ນ.*

## *ຂ. ມະນຸດໄດ້ຮັບ<u>ສິດປົກຄອງ</u>ເໜືອແຜ່ນດິນໂລກ*

**ປະຖົມມະການ 1:28**
*28 ແລ້ວກໍອວຍໄຊໃຫ້ພອນເຂົາວ່າ, "ຈົ່ງມີລູກເຕົ້າໃຫ້ມາກຫລາຍ ເພື່ອເຊື້ອສາຍຂອງເຈົ້າຈະມີທົ່ວທຸກແຫ່ງຫົນ ແລະປົກຄອງທຸກສິ່ງເທິງແຜ່ນດິນໂລກນີ້. ເຮົາໃຫ້ເຈົ້າມີອຳນາດເໜືອປາ, ນົກ, ແລະ ສັດປ່າທຸກຊະນິດ.*

**ເພງສັນລະເສີນ 8:6**
**ເພງສັນລະເສີນ 115:16**

## *ຄ. ສັດຕູຝ່າຍແພ້ ທັງຄົນແລະອານາຈັກຂອງມັນກໍຖືກຍຶດ*

1. ການຕັ້ງ**<u>ບັນລັງ</u>**ຂອງມັນຂຶ້ນເອງ: ເພື່ອມີສິດອຳນາດ, ເພື່ອປົກຄອງ ແລະ ໃຫ້ຕົນເອງເປັນທີ່ນະມັດສະການ.

    **ລູຊີເຟີຖືກຂັບໄລ່ອອກ** **ເອຊາຢາ 14:12–17**

    - **ນຳເອົາການກະບົດຂອງມັນລົງມາຍັງແຜ່ນດິນໂລກ.**

      **ປະຖົມມະການ 3** ມະນຸດຖືກຫລອກລວງທັງຕົວລາວ ແລະອານາຈັກຂອງລາວກໍຕົກເປັນຂອງສັດຕູ, ຢູ່ໃຕ້ສິດຂອງມັນ ແລະອຳນາດຂອງຄວາມບາບ.

    - **ພະເຈົ້າຊົງປະກາດສົງຄາມ** **ປະຖົມມະການ 3:15 ໂຣມ 3:23; 5:12; 6:16; 6:23**

      ***ປະຖົມມະການ 3:15***
      *15 ມຶງ ກັບຍິງນັ້ນ ຈະຖືກເຮັດໃຫ້ບັງບຽດກຽດຊັງກັນ ພົງພັນຂອງຍິງ ແລະມຶງຈະເປັນສັດຕູຄູ່ອາຄາດ ພົງພັນຂອງຍິງນັ້ນຈະຢຽບຫົວຂອງມຶງໃຫ້ ມຸ່ນ ແລະພົງພັນຂອງມຶງນັ້ນ ກໍຈະຕອດສົ້ນໜອງເຂົາໃຫ້ບວມ.*

      **ໂຣມ 3:23** **ໂຣມ 5:12**
      **ໂຣມ 6:16** **ໂຣມ 6:23**

GCI

- "ມະນຸດສະໂລກທັງໝົດຈົມຢູ່ໃຕ້ອຳນາດຂອງມານຮ້າຍ."
  **1ໂຢຮັນ 5:19**

- "ຜູ້ປົກຄອງໂລກນີ້." **ໂຢຮັນ 12:31, 14:30 16:11**

2. ການຂະຫຍາຍອານາຈັກແຫ່ງຄວາມມືດ. ເພື່ອຍຶດຄອງ ແລະຄວບຄຸມ**<u>ພື້ນທີ່</u>**ໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ມັນຈະເຮັດໄດ້.

   **ລູກາ 4:5-6**

# II. ໄຊຊະນະອັນສະຫງ່າງາມ

## *ກ. ຊົງເສຍສະລະພະອົງເອງ*

ຊົງສະເດັດລົງມາຈາກບັນລັງຂອງພະອົງ.

***ຟີລິບປອຍ 2:6-7***
*6 ພະອົງຊົງສະພາບຂອງພະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າ ການເທົ່າທຽມກັບພະເຈົ້ານັ້ນເປັນສິ່ງທີ່ຕ້ອງຍຶດຫວງໄວ້. 7 ແຕ່ໄດ້ກັບຊົງຍອມສະຫລະ ແລະ ຊົງຮັບສະພາບຂ້ອຍຂ້າ ຊົງຖືກຳເນີດເປັນມະນຸດ.*

## *ຂ. ຊາຕານແມ່ນຜູ້ປົກຄອງອານາຈັກຕ່າງໆເທິງໂລກນີ້*

***ລູກາ 4:5-6***
*5 ແລ້ວມານໄດ້ນຳພະອົງຂຶ້ນເມືອສະແດງບັນດາຣາຊະແຜ່ນດິນທົ່ວພິພົບໃນບັດດຽວ ຊີ້ໃຫ້ພະອົງເຫັນ. 6 ແລະ ມານໄດ້ທູນພະອົງວ່າ, "ອຳນາດທັງໝົດນີ້ ສະຫງ່າຣາສີຂອງຣາຊະຈັກແຜ່ນດິນນັ້ນ ເຮົາຈະຍົກໃຫ້ແກ່ທ່ານ ເພາະວ່າຊົງມອບເປັນສິດໄວ້ແກ່ເຮົາແລ້ວ, ແລະ ເຮົາປາຖະນາຈະໃຫ້ແກ່ຜູ້ໃດກໍ່ໃຫ້ແກ່ຜູ້ນັ້ນ.*

## *ຄ. ຜູ້ປົກຄອງໂລກນີ້ຈະຖືກຂັບໄລ່ອອກ*

***ໂຢຮັນ 12:31***
*31 ບັດນີ້ເຖິງເວລາພິພາກສາໂລກນີ້ ບັດນີ້ຜູ້ຄອງໂລກນີ້ຈະຖືກກຳຈັດອອກເສຍ.*

### *ງ. ໄຊຊະນະ*

***ໂກໂລຊາຍ 2:13-15***

*13 ແລະ ຝ່າຍເຈົ້າທັງຫລາຍທີ່ຕາຍໄປແລ້ວດ້ວຍການຫລົງຜິດຂອງພວກເຈົ້າ, ແລະດ້ວຍເຫດທີ່ເນື້ອກາຍຂອງພວກເຈົ້າບໍ່ໄດ້ຮັບພິທີຕັດ ພະອົງໄດ້ຊົງບັນດານໃຫ້ພວກເຈົ້າມີຊີວິດຮ່ວມກັນກັບພະອົງ ແລະຊົງໂຜດຍົກໂທດການຫລົງຜິດທັງຫລາຍຂອງພວກເຮົາ. 14 ພະອົງໄດ້ຊົງລຶບລ້າງຂໍ້ກົດທີ່ຜູກມັດເຮົາດ້ວຍບັນຍັດຕ່າງໆ ຊຶ່ງຂັດຂວາງພວກເຮົານັ້ນ ແລະໄດ້ຊົງຍົກເລີກເສຍໂດຍຕອກຕິດໄວ້ທີ່ໄມ້ກາງແຂນ. 15 ໂດຍໄມ້ກາງແຂນນັ້ນ ພະອົງຊົງປົດຜູ້ປົກຄອງ ແລະອຳນາດທັງຫລາຍເສຍ ແລະໄດ້ຊົງປະຈານເອົາຢ່າງເປີດເຜີຍໂດຍນຳເອົາເປັນຊະເລີຍ ໃນຂະບວນແຫ່ງໄຊຊະນະຂອງພະອົງ.*

### *ຈ. ການສິ້ນພະຊົນຂອງພະເຢຊູໄດ້ປົດຜູ້ທີ່ມີອຳນາດແຫ່ງຄວາມຕາຍລົງເສຍ*

***ເຮັບເຣີ 2:14***

*14 ເຫດສັນນັ້ນ, ເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພະອົງຈຶ່ງໄດ້ຊົງຮ່ວມຊາດມະນຸດເໝືອນກັນເພື່ອໂດຍທາງຄວາມຕາຍນັ້ນ ພະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍ ຄື ພະຍາມານ.*

1. ພະເຢຊູຊົງມັດຄົນແຂງແຮງ - ຢ່າງໃດ?

   **ມັດທາຍ 12:28-29**

   *"ແຕ່ຖ້າເຮົາຂັບໄລ່ຜີອອກດ້ວຍພະວິນຍານຂອງພະເຈົ້າ ດັ່ງນັ້ນ ຣາຊະອາຈັກຂອງພະເຈົ້າກໍມາເຖິງພວກທ່ານແລ້ວ. ຫລື ໃຜຈະເຂົ້າໄປໃນເຮືອນຂອງຄົນແຂງແຮງ ແລະຈະປຸ້ນເອົາຊັບຂອງເພິ່ນໄດ້ຢ່າງໃດ ເວັ້ນໄວ້ແຕ່ຈະມັດຄົນແຂງແຮງນັ້ນໄວ້ເສຍກ່ອນ ແລ້ວຈຶ່ງຈະປຸ້ນເອົາຊັບໃນເຮືອນຂອງເພິ່ນໄດ້."*

2. ພະເຢຊູໄດ້ຍາດ (ລັກ) ເອົາຊັບສິນຂອງມັນມາໄດ້ແລ້ວ - ໄດ້ປຸ້ນເຮືອນຂອງຊາຕານ.

3. ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ

   **ມັດທາຍ 16:18**

   *"ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ ແລະປະຕູແຫ່ງມໍລະນາຈະມີໄຊຕໍ່ຄຣິສຕະຈັກນັ້ນ ບໍ່ໄດ້"*

**ໄຊຊະນະທີ່ໄມ້ກາງແຂນໄດ້ເຮັດໃຫ້ອານາຈັກຂອງພະເຈົ້າມີລິດເດດປົກຄຸມເໜືອອານາຈັກແຫ່ງຄວາມມືດ.**

GCI

# III. ສະພາບການໃນປັດຈຸບັນ

**ເຮັບເຣີ 10:12-13;  ເຮັບເຣີ 2:8**

***ກ. ຊົງຖືກຍົກຂຶ້ນ ແລະ ໄດ້ຮັບພະລາຊະທານສິດອຳນາດທັງປວງ***

***ຟີລິບປອຍ 2:9-11***
*9 ເຫດສັນນັ້ນ ພະເຈົ້າຈຶ່ງໄດ້ຊົງຍົກພະອົງຂຶ້ນເຖິງທີ່ສູງສຸດ ແລະໄດ້ຊົງປະທານພະນາມນັ້ນ ຊຶ່ງຢູ່ເໜືອນາມທັງປວງໃຫ້ແກ່ພະອົງ. 10 ເພື່ອເພາະພະນາມນັ້ນ ທຸກຫົວເຂົ່າໃນສະຫວັນ, ເທິງແຜ່ນດິນໂລກ, ແລະໃຕ້ພື້ນດິນກໍດີ ຈະໄດ້ຄຸເຂົ່າລົງກາບພະເຢຊູ 11 ເພື່ອທຸກລີ້ນຈະຍອມຮັບວ່າ "ພະເຢຊູຄຣິດຊົງເປັນອົງພະຜູ້ເປັນເຈົ້າ" ອັນເປັນຖວາຍພະກຽດແກ່ພະບິດາເຈົ້າ.*

***ຂ. ພວກເຮົາຍັງບໍ່ເຫັນສິ່ງທັງປວງຢູ່ໃຕ້ອຳນາດຂອງພະອົງເທື່ອ***
**ເຮັບເຣີ 1:3; 2:8**

***ເຮັບເຣີ 2:8***
*8 "ພະອົງເຈົ້າຊົງມອບສິ່ງທັງປວງໃຫ້ຢູ່ພາຍໃຕ້ຕີນຂອງເພິ່ນ" ໃນການທີ່ພະອົງຊົງມອບສິ່ງທັງປວງໃຫ້ຢູ່ໃຕ້ອຳນາດຂອງເພິ່ນນັ້ນ ບໍ່ມີສິ່ງໃດທີ່ຊົງປະໄວ້ນອກເໜືອຈາກອຳນາດຂອງເພິ່ນ ແຕ່ບັດນີ້ພວກເຮົາຍັງບໍ່ເຫັນວ່າ ສິ່ງທັງປວງຢູ່ໃຕ້ອຳນາດຂອງເພິ່ນ.*

***ຄ. ກຳລັງລໍຖ້າ . . . ຈົນກວ່າ . .***

***ເຮັບເຣີ 10:12-13***
*12 ແຕ່ເມື່ອປະໂຣຫິດຕົນນີ້ໄດ້ຖວາຍເຄື່ອງບູຊາອັນດຽວ ເປັນເຄື່ອງບູຊາລົບລ້າງບາບໄດ້ຕະຫລອດໄປ "ພະອົງກໍສະເດັດປະທັບເບື້ອງຂວາຂອງພະເຈົ້າ". 13 ເພື່ອຊົງຄອຍຢູ່ "ຈົນບັນດາສັດຕູຂອງພະອົງຖືກປາບລົງໃຕ້ພະບາດຂອງພະອົງ."*

***ງ. ອານາຈັກຕ່າງໆຍັງຮົບເສິກກັນຢູ່ - ຍັງສູ້ຮົບຢ່າງຮຸນແຮງ***

ເປັນການຮົບເສິກເພື່ອ: ອຳນາດ - ສິດ - ປະຊາຊົນ

***ຈ. ຄຣິສຕະຈັກ***

- ໄຊຊະນະຂອງພະອົງຢູ່ເໜືອອຳນາດຂອງພະຍາມານ ແລະນຳໃຊ້ໄດ້ໃນໂລກນີ້, ບັດນີ້ ໄຊຊະນະນັ້ນໄດ້ຢູ່ໃນມືຂອງຄຣິສຕະຈັກແລ້ວ.

  ***1ໂກຣິນໂທ 15:57***
  *57 ແຕ່ຈົ່ງຂອບພະຄຸນພະເຈົ້າຜູ້ຊົງປະທານໄຊຊະນະແກ່ເຮົາທັງຫລາຍ ດ້ວຍພະເຢຊູຄຣິດເຈົ້າຂອງພວກເຮົາ.*

GCI

- ຊົງພະລາຊະທານໄຊຊະນະນັ້ນໃຫ້ແກ່ເຮົາ!

***ເອເຟໂຊ 3:10*** *"ເພື່ອວ່າ ໃນປັດຈຸບັນນີ້ຜູ້ປົກຄອງ ແລະຜູ້ມີອຳນາດໃນສະຫວັນສະຖານ ຈະໄດ້ຮູ້ຍັງພະສະຕິປັນຍາອັນສັບຊ້ອນຂອງພະເຈົ້າ**ໂດຍທາງຄຣິສຕະຈັກ.**"*

- ບັດນີ້ ຄວາມໂກດຮ້າຍ / ຄວາມກຽດຊັງຂອງພະອົງຕໍ່ຊາຕານຈະໄດ້ສະແດງອອກໂດຍທາງພວກເຮົາ!!!

***ສຸພາສິດ 8:13*** *"ການຢຳເກງພະຜູ້ເປັນເຈົ້າ ແມ່ນການ**ກຽດຊັງສິ່ງທີ່ຊົ່ວ**ສຳລັບຕົວເຮົາເອງນັ້ນ ເຮົາກຽດຊັງສິ່ງເຫລົ່ານີ້ເດີ້ ຄື ການຈອງຫອງຟອງຕົວຂຶ້ນ ແລະການອວດດີອວດເດັ່ນ ເປັນການປະພຶດໃນທາງຊົ່ວຮ້າຍ ແລະ ເປັນຄຳເວົ້າອັນບໍ່ຈິງ."*

## *ສ. ຄຳຖາມຕ່າງໆ:*

1. ຊີວິດຂອງຂ້າພະເຈົ້າໄດ້ສະແດງອອກເຖິງຄວາມກຽດຊັງທີ່ພະເຈົ້າມີຕໍ່ສິ່ງຊົ່ວຮ້າຍບໍ?

2. ຊີວິດຂອງຂ້າພະເຈົ້າໄດ້ສະແດງອອກເຖິງຄວາມກຽດຊັງຕໍ່ຄວາມບາບຫລືບໍ່ ແລະໄດ້ສະແດງອອກເຖິງຄວາມຮັກ ຫລື ການຍິນຍອມຕໍ່ຄວາມຊອບທຳ ກັບວິທີທາງຂອງພະເຈົ້າບໍ?

3. ຂ້າພະເຈົ້າອ່ອນໄມ້ອ່ອນມືເພາະເຫັນແກ່ສັນຕິສຸກບໍ?

4. ຂ້າພະເຈົ້າສະແຫວງຫາຄວາມເຫັນດີເຫັນງາມ ແລະການຍອມຮັບຈາກຄົນອື່ນໆບໍ, ໂດຍການຍອມຮັບເອົາວິທີທາງຕາມໂລກ. ຊຶ່ງແທນທີ່ຈະສະແຫວງຫາສິ່ງເຫລົ່ານີ້ຈາກອົງພະຜູ້ເປັນເຈົ້າ?

5. ແມ່ນຄວາມປາດຖະໜາ ແລະຄວາມຫິວກະຫາຍຂອງຂ້າພະເຈົ້າບໍທີ່ຈະເຮັດໃຫ້ເປັນທີ່ຊອບພະໄທພະເຢຊູໃນທຸກການກະທຳ?

6. ຂ້າພະເຈົ້າພ້ອມ ແລະເຊື່ອຟັງເໝືອນຢ່າງເປັນທະຫານທີ່ດີບໍ?

7. ເວລາທີ່ຂ້າພະເຈົ້າເຫັນຝູງຊົນແລ້ວ ຂ້າພະເຈົ້າມີຄວາມສົງສານເຂົາເຈົ້າບໍ ເພາະຊາຕານກຳລັງທຳລາຍພວກເຂົາຢູ່?
8. ຂ້າພະເຈົ້າໄດ້ສະແດງຄວາມໃຈຮ້າຍອັນຊອບທຳບໍ ເວລາທີ່ເຫັນເຮືອນຂອງອົງພະຜູ້ເປັນເຈົ້າຫັນໜີຈາກການເປັນບ່ອນທີ່ໃຫ້ການຢຽວຢາຮັກສາ ມາເປັນບ່ອນທີ່ສ້າງຜົນປະໂຫຍດສຳລັບຕົນເອງ?

9. ຂ້າພະເຈົ້າໂສກເສົ້າເສຍໃຈບໍທີ່ໄພ່ພົນຂອງພະອົງຍອມອ່ອນຂໍ້ (ຕໍ່ຄວາມບາບ)?

**ໂຣມ 12:9** *"ຈົ່ງຮັກດ້ວຍໃຈຈິງ, ຈົ່ງກຽດຊັງສິ່ງທີ່ຊົ່ວ, ຈົ່ງຍຶດໝັ້ນໃນສິ່ງທີ່ດີ."*

**ໂຣມ 12:21** *"ຢ່າໃຫ້ຄວາມຊົ່ວໄດ້ຊະນະເຈົ້າ ແຕ່ຈົ່ງຊະນະຄວາມຊົ່ວດ້ວຍຄວາມດີ."*

# IV. ຂັ້ນຕອນ ຫລື ແຜນຂອງສັດຕູ

**ປັນຍາຈານ 9:14-18**
*"ຄັ້ງໜຶ່ງ ມີເມືອງນ້ອຍແຫ່ງໜຶ່ງທີ່ມີປະຊາຊົນບໍ່ຫລາຍ. ກະສັດຜູ້ໜຶ່ງມີອຳນາດຫລາຍໄດ້ໂຈມຕີເມືອງນີ້. ເພິ່ນປິດລ້ອມເມືອງໄວ້ ແລະຕຽມທະລຸກຳແພງເມືອງ, ມີຊາຍຍາກຈົນ ຄົນໜຶ່ງທີ່ອາໄສຢູ່ໃນເມືອງນີ້. ລາວເປັນຄົນທີ່ມີປັນຍາຈົນຊ່ອຍເມືອງນີ້ໄວ້ໄດ້. ແຕ່ບໍ່ມີໃຜຄິດເຖິງລາວເລີຍ. ຂ້າພະເຈົ້າເຄີຍເວົ້າຢູ່ສະເໝີວ່າ ປັນຍາດີກວ່າກຳລັງ ແຕ່ເມື່ອຄົນມີປັນຍາຜູ້ໜຶ່ງຍາກຈົນ ຄົນກໍດູຖູກລາວ ແລະບໍ່ເຊື່ອຟັງຄຳແນະນຳຂອງລາວ. ຟັງຄຳເວົ້າອັນສຸຂຸມຂອງຄົນມີປັນຍາ ກໍດີກວ່າຟັງສຽງຮ້ອງຂອງນັກປົກຄອງໃນທີ່ປະຊຸມຂອງຄົນໂງ່ຈ້າ. ປັນຍາດີກວ່າອາວຸດ ແຕ່ຄົນບາບຜູ້ໜຶ່ງລຶບຄວາມດີໄດ້ຢ່າງຫຼວງຫລາຍ."*

ສິ່ງໜຶ່ງທີ່ສຳຄັນທີ່ສຸດໃນການເຮັດເສິກ ກໍຄື ຕ້ອງຮູ້ຈັກ ແລະເຂົ້າໃຈສັດຕູຂອງທ່ານ.

## *ກ. ຂັດຂວາງຊີວິດ ແລະ ພັນທະກິດຂອງຜູ້ທີ່ເຊື່ອ*

1. ເຮັດໃຫ້**ການປະຕິບັດ**ພັນທະກິດຢຸດສະງັກ **1ເທຊະໂລນິກ 2:18**

2. **ເຮັດການລໍ້ລວງຕ່າງໆ** **ລູກາ 4:1-13; ຢາໂກໂບ 1:13-16**

   **ໂຢຮັນ 14:30** *"... ຜູ້ປົກຄອງໂລກ. ບໍ່ມີສິດອັນໃດກ່ຽວກັບເຮົາ."*

3. **ການເຈັບເປັນ** **ລູກາ 13:10-17 (ຂໍ້. 11, 16)**

4. **ການຂົ່ມເຫັງ** **2ໂກຣິນໂທ 11:23-27**

5. ຂັດຂວາງ**ຄຳອະທິຖານ** **ດານີເອນ 10:26, 12, 20-21**

6. ເຮັດໃຫ້ທ່ານ**ເຢັນ, ບໍ່ໃສ່ໃຈ, ຂີ້ຄ້ານ, ພໍແລ້ວ,** **ມັດທາຍ 24:12 ເອເຟຊຽນ 9:4 ພະນິມິດ 3:15-19**

7. ເຮັດໃຫ້**ຄວາມຄິດຈິດໃຈ**ມືດໄປ **2ໂກຣິນໂທ 4:4**

8. ຍາດເອົາ**ພະທຳ**ໄປ **ມັດທາຍ 13:19**

9. ມາເພື່ອຈະຂ້າ, ລັກ ແລະ **ທຳລາຍ**

   ກ) ມານຮ້າຍເຮັດໃຫ້ປາກບໍ່ໄດ້. **ລູກາ 11:14**

   ຂ) ມານຮ້າຍຂັດຂວາງການເບິ່ງເຫັນແລະການປາກເວົ້າ. **ມັດທາຍ 12:22**

   ຄ) ເຮັດໃຫ້ຄົນຂ້າຕົວຕາຍ **ມາລະໂກ 9:22**

   ງ) ເຮັດໃຫ້ຄົນເຈັບປ່ວຍເປັນເວລາ 38 ປີ **ໂຢຮັນ 5:5, 14**

GCI

ເພງສັນລະເສີນ 97:10 *"ພະຜູ້ເປັນເຈົ້າຮັກພວກທີ່**ກຽດຊັງ**ຄວາມຊົ່ວນົວໝອງ ພະອົງຄຸ້ມຄອງຊີວິດຂອງປະຊາຊົນຂອງພະອົງໄວ້. ຝ່າຍຝູງຊົນຂອງພະເຈົ້າ ພະອົງກໍຊ່ອຍກອບກູ້ເອົາຈາກອຳນາດຂອງຄົນຊົ່ວຮ້າຍ."*

## *ຂ. ສ້າງຕັ້ງປ້ອມທີ່ໝັ້ນ - ເຂດປົກຄອງ ຫລືພື້ນທີ່ຄວບຄຸມຂອງມັນ*

**2ໂກຣິນໂທ 10:3-4**
*3 ເພາະເຖິງແມ່ນວ່າເຮົາຢູ່ກິນໃນໂລກກໍຈິງ ເຮົາກໍບໍ່ໄດ້ສູ້ຮົບຕາມທຳມະດາມະນຸດ. 4 ເພາະວ່າ ເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີຣິດອຳນາດຈາກພະເຈົ້າ ອາດທຳລາຍຄ້າຍອັນເຂັ້ມແຂງໄດ້ ຄື ທຳລາຍຄວາມຄິດທີ່ມີເຫດຜົນອັນບໍ່ຈິງ.*

1. ປ້ອມທີ່ໝັ້ນ**ສ່ວນບຸກຄົນ** (ບາບຕາມນິໄສຂອງບຸກຄົນ)
   ແມ່ນແນວຄວາມຄິດຂອງພວກເຮົາ - ເຊື່ອວ່າ ຊາຕານເລີ່ມພະຍາຍາມສ້າງ**ອິດທິພົນ**ເໜືອພວກເຮົາ, ຈັດຕັ້ງ**ແຜນການ** ແລະເລີ່ມ**ການຄວບຄຸມ**ພື້ນທີ່ນີ້ຢ່າງຊ້າໆ ແລະຈາກຈຸດນີ້ເອງ ອານາຈັກຂອງມັນກໍ**ຂະຫຍາຍອອກ.**

   **2ໂກຣິນໂທ 10:5-6**

   ກ) ການໃຫ້ຄວາມສຳຄັນ**ຕາມທຳມະດາໂລກ**

   (i) **ມັດທາຍ 16:21-23** **ລູກາ 16:14-15**

   (ii) **ມາຣະໂກ 4:18-19** **1ໂຢຮັນ 2:14-17**

   (iii) **ຢາໂກໂບ 4:4**

   ຂ) **ຄວາມຈອງຫອງ**

   (i) **ຢາໂກໂບ 4:5-10** **ເອຊາຢາ 2:10-17**

   ຄ) **ການບໍ່ໃຫ້ອະໄພກັນ**

   (i) **2ໂກຣິນໂທ 2:10-11** **ເຮັບເຣີ 12:15**

   (ii) **ມັດທາຍ 7:1** **ມັດທາຍ 18:21-35**

   ງ) **ຄວາມໃຈຮ້າຍ, ການເວົ້າຕິວະ, ການລັກຂະໂມຍ, ຄຳເວົ້າທີ່ບໍ່ດີ, ການໃສ່ຮ້າຍ ປ້າຍສີ, ຄວາມຂົມຂື່ນ, ຄວາມອິດສາ** ແລະ **ຄວາມຢາກທີ່ເຫັນແກ່ຕົວ**:

   (i) **ເອເຟໂຊ 4:25-32**

   (ii) **ຢາໂກໂບ 3:1-16; 4:11-12**

   ຈ) ຕັນຫາຂອງ**ເນື້ອໜັງ** **ຄາລາເຕຍ 5:19**

GCI

ສ) **ຄວາມສົງໃສ** **ປະຖົມມະການ 3:1; ລູກາ 4:1-13**
**ຢາໂກໂບ 1:6-8**

ຊ) ການບິດເບືອນ**ຄວາມຈິງ** **2ຕີໂມທຽວ 2:24-26**
**2ໂກຣິນໂທ 11:3**

ຍ) **ຫລັກຄໍາສອນຕ່າງໆ**ຂອງພວກຜີຮ້າຍ **1ຕີໂມທຽວ 4:1**

**1ຕີໂມທຽວ 3:7** *"ອີກປະການໜຶ່ງ, ຜູ້ດູແລນັ້ນຕ້ອງເປັນຜູ້ທີ່ຄົນພາຍນອກນັບຖື ຢ້ານວ່າ ຈະຖືກການຕິຕຽນນິນທາ ແລະຖືກບ້ວງບາບຂອງມານ."*

**2ຕີໂມທຽວ 2:26** *"ຈິ່ງຫລີກເສຍຈາກຖ້ອຍຄໍາອັນບໍ່ເປັນປະໂຫຍດ ແລະນອກສາສະໜາ ເພາະຄໍາຢ່າງນັ້ນຈະນໍາຄົນໄປສູ່ຄວາມອະທໍາທະວີຫລາຍຂຶ້ນ."*

2. ປ້ອມອັນເຂັ້ມແຂງຂອງ**ຄອບຄົວ**

ເປັນຜິດບາບຕ່າງໆທີ່ພໍ່ (ຫົວໜ້າຄອບຄົວ) ທີ່ໄດ້ເຮັດຄວາມຊົ່ວຊ້າຕ່າງໆມານາ ຫລື ມີຈຸດອ່ອນຕໍ່ຜິດບາບປະເພດໃດໜຶ່ງ ແລ້ວໄດ້ສືບເຊື້ອໄປຫາລຸ້ນຕໍ່ໆໄປ.

ກ) **ປະຖົມມະການ 4:23-24** ດັ່ງກາອິນໄດ້ຂ້າຄົນ, ຕໍ່ມາລູກຫລານຂອງລາວກໍເຮັດຕາມ.

*ປະຖົມມະການ 4:23-24*
*23 ສ່ວນລາເມັກນັ້ນ ລາວມັກເວົ້າອວດເມຍທັງສອງຂອງຕົນຢູ່ສະເໝີວ່າ*
*"ອາດາແລະຊິນລາ ນ້ອງຈົ່ງຟັງໃຫ້ດີ ສິ່ງທີ່ອ້າຍເລົ່າ*
*ອ້າຍໄດ້ຕີຊາຍໜຸ່ມຜູ້ໜຶ່ງໃຫ້ສິ້ນຊີບ ເພາະລາວໄດ້ຕີອ້າຍໃຫ້ຊໍ້າບວມ.*
*24 ຜູ້ໃດທໍາລາຍກາອິນນັ້ນ ຈະຖືກໂທດເຈັດເທົ່າ*
*ແຕ່ຖ້າຜູ້ໃດທໍາລາຍອ້າຍ ຜູ້ນັ້ນຈະຮັບໂທດເຈັບສິບເຈັດເທື່ອ."*

ຂ) ອັບຣາຮາມເວົ້າຕົວະເລື່ອງເມຍຂອງເພິ່ນ. **ປະຖົມມະການ 12:13;20:2**
ອີຊາກເວົ້າຕົວະເລື່ອງເມຍຂອງຕົນ. **ປະຖົມມະການ 26:7**

ຄ) **ສາສະໜາຊົ່ວຮ້າຍຕ່າງໆ** ແລະ ການບູຊາ**ຮູບເຄົາລົບ**: **ລະບຽບພວກເລວີ 20:5**

ງ) **ຄວາມໂລບ – ການຮັກເງິນ ການສໍ້ໂກງ**

ເອລີ ແລະ ລູກຊາຍຜູ້ຊົ່ວຮ້າຍຂອງລາວ: **1ຊາມູເອນ 2:29; 3:13**

**1ຊາມູເອນ 3:13** *"ເຮົາບອກລາວແລ້ວວ່າ ເຮົາຈະລົງໂທດຄອບຄົວຂອງລາວຕະຫຼອດໄປ ເພາະພວກລູກຊາຍຂອງລາວໄດ້ກ່າວຄໍາຊົ່ວຊ້າຕໍ່ສູ້ເຮົາ. ສ່ວນເອລີເອງກໍຮູ້ຈັກວ່າ ເຮົາເວົ້າດັ່ງນັ້ນ ແຕ່ລາວບໍ່ໄດ້ຫ້າມພວກເຂົາ."*

GCI

ຈ) **<u>ການຜິດສິນທຳ</u>**

ໂລດ ແລະ ລູກສາວຂອງລາວ: **ປະຖົມມະການ 19:30, 32**

*"ເພາະໂລດຢ້ານກົວ ຈຶ່ງບໍ່ຢາກຢູ່ໃນເມືອງໂຊອາອີກຕໍ່ໄປ, ສະນັ້ນ ເພິ່ນຈຶ່ງພາລູກສາວທັງສອງຍ້າຍຂຶ້ນໄປເນີນພູ ແລະອາໄສຢູ່ໃນຖໍ້າ. 32 ມາເທາະ ຈົ່ງເອົາເຫລົ້າໃຫ້ພໍ່ຂອງເຮົາດື່ມຈົນເມົາ ເພື່ອພວກເຮົາຈະໄດ້ນອນນຳເພິ່ນ ແລະໂດຍວິທີນີ້ພວກເຮົາຈະໄດ້ມີລູກ."*

3. ປ້ອມອັນເຂັ້ມແຂງຂອງ **ເມືອງ, ເຜົ່າ, ຜູ້ຄົນ ຫລື <u>ຊົນຊາດ</u>**

ເວລາທີ່ຜູ້ຄົນ ຫລື ກຸ່ມຄົນໃດໜຶ່ງມອບຕົນເອງໃຫ້ກັບ**ຄຳສອນຂອງຜີຮ້າຍ** ຫລື ເຮັດການບາບຕ່າງໆ, ອັນນີ້ຈະເຮັດໃຫ້ຊາຕານມີສິດ**ຄອບຄອງ**ພວກເຂົາໄດ້.

**ສິດຄອບຄອງ**ທີ່ພະເຈົ້າໄດ້ຊົງປະທານໃຫ້ພວກເຂົານັ້ນ, ພວກເຂົາໄດ້ມອບໃຫ້ແກ່ຊາຕານແລ້ວ ຄື ການທີ່ພວກເຂົາເຊື່ອຟັງມັນໃນການບາບ

**ກິດຈະການ 17:26 ພະບັນຍັດສອງ 32:8**

ກ) ອາດາມສູນເສຍອານາຈັກ (ດິນແດນ) ຂອງຕົນໃຫ້ແກ່ຊາຕານ.

ຂ) ພະເຈົ້າຂອງຊາວເອເຟໂຊຄື "ເດຍນາ" ເທບແຫ່ງເວດມົນ ແລະການທຳນາຍ.

ດັ່ງນັ້ນແລ້ວ, **ເຂດປົກຄອງ** (ເມືອງ, ເຜົ່າ ຫລື ຊົນຊາດ) ເຊັ່ນບຸກຄົນ, ຈຶ່ງຖືກຄອບ ຄຸມ ແລະກຳນົດໂດຍວິນຍານຊົ່ວ.

ຄ) ເມືອງແຕ່ລະເມືອງທີ່ຖືກເອີ່ຍຊື່ນັ້ນ ຕ້ອງໄດ້ຮັບຜິດຊອບຕໍ່ການກະທຳຂອງຕົນ.
**ມັດທາຍ 11:20-24**

ງ) **ຮາກຖານຝ່າຍວິນຍານ**ທີ່ເມືອງ ຫລື ປະເທດນັ້ນໆຖືກສ້າງຂຶ້ນແມ່ນມີຄວາມສຳຄັນຫລາຍ.
**ເຮັບເຣີ 11:10**

***ເຮັບເຣີ 11:10***
*10 ຝ່າຍປະໂຣຫິດທຸກຕົນກໍຢືນບົວລະບັດຢູ່ທຸກວັນ ໂດຍນຳເຄື່ອງບູຊາຢ່າງດຽວກັນມາຖວາຍເລື້ອຍໆ ເຄື່ອງບູຊານັ້ນບໍ່ສາມາດຊຳລະລ້າງບາບໄດ້ຈັກເທື່ອ.*

4. ປ້ອມອັນເຂັ້ມແຂງຂອງ**<u>ສັງຄົມ</u>**

ການກົດຂີ່ຂົ່ມເຫັງໃນເມືອງນັ້ນໆ ມີຍ້ອນຄວາມບໍ່ຍຸດຕິທຳທາງສັງຄົມ, ການກຽດຊັງກັນ,
ຄວາມຍາກຈົນ ແລະອາຊະຍາກຳຕ່າງໆ.

ເມື່ອມີການບາບເກີດຂຶ້ນແລ້ວ ຊາຕານກໍຍິ່ງມີພະລັງອຳນາດເທົ່ານັ້ນ:

ກ) ການຫລັ່ງ**<u>ເລືອດ</u>** **ປະຖົມມະການ 4:10-12**

**ເພງສັນລະເສີນ 106:35-38** *"ພວກເຂົາໄດ້ຖວາຍລູກຊາຍຍິງຂອງຕົນເອງໃຫ້ ເປັນເຄື່ອງບູຊາແກ່ຮູບປັ້ນ."*

**ເຮັບເຣີ 12:24** *"ມາເຖິງພະເຢຊູຜູ້ຊົງເປັນຜູ້ກາງຝ່າຍຄຳສັນຍາໃໝ່, ແລະມາເຖິງພະໂຮຫິດຊຶ່ງຊິດໃສ່ແລ້ວ **ທີ່ມີສຽງຮ້ອງອັນດີກວ່າເລືອດຂອງອາເບັກອີກ**."*

ເລືອດຂອງອາເບນໄດ້ຮ້ອງຂໍການພິພາກສາ (ການຕັດສິນ). ສ່ວນພະໂລຫິດ ຂອງພະເຢຊູໄດ້ຮ້ອງຂໍການອະໄພໂທດ.

ຂ) **ຄວາມຊົ່ວຊ້າ<u>ທາງເພດ</u>**

ການພິພາກສາທີ່ຮຸນແຮງ **ປະຖົມມະການ 18:20; 19:4-9**
ການພິພາກສາທີ່ຮຸນແຮງ **ໂຣມ 1:23-32 VS.27**

5. ປ້ອມອັນເຂັ້ມແຂງຂອງ**<u>ອຸດົມການ</u>**

ສິ່ງເຫລົ່ານີ້ແມ່ນສາມາດສົ່ງຜົນຕໍ່ວັດທະນະທຳທັງໝົດໄດ້. ວິນຍານຊົ່ວຈະຊອກຫາຜູ້ນຳປະຊາຊົນ ຄື ຜູ້ທີ່ຈະມາຮັບໃຊ້ ແລະມັນຈະມອບອຳນາດນັ້ນໃຫ້ແກ່ພວກເຂົາ.

ກ) **"ກະສັດແຫ່ງຕີເລ"** ໃນຟ້າສະຫວັນ ແລະກະສັດແຫ່ງຕີເລເທິງແຜ່ນດິນໂລກນີ້.
**ເອເສກຽນ 28:2, 12**

ຂ) **"ກະສັດແຫ່ງເປີເຊຍ"** ແລະກະສັດແຫ່ງເປີເຊຍ. **ດານີເອນ 10:20.**

**ເອຊາຢາ 24:21** *"ເມື່ອເວລານັ້ນມາເຖິງ ພະຜູ້ເປັນເຈົ້າຈະລົງໂທດບັນດາອຳນາດເບື້ອງເທິງ ແລະບັນດານັກປົກຄອງເບື້ອງລຸ່ມ ທີ່ເທິງແຜ່ນດິນໂລກນີ້."*

6. ປ້ອມອັນເຂັ້ມແຂງຂອງ**<u>ສາສະໜາ</u>ຜີຮ້າຍ**

**ພະບັນຍັດສອງ 18:9-14** **1ກຣທ 10:20-21;** **2ກຣທ 6:14-7:1**

ໄດ້ຖືກກໍ່ຕັ້ງຂຶ້ນໂດຍຄົນທີ່ປະຕິເສດການເປີດເຜີຍຈາກພະເຈົ້າ ແລະຜູ້ທີ່ນະມັດສະການ ຫລື ຮັບໃຊ້ວິນຍານຊົ່ວເພື່ອຄວາມສະດວກສະບາຍຂອງພວກເຂົາ ແລະເພື່ອເຮັດໃຫ້ຄວາມຕ້ອງການຝ່າຍວິນຍານຂອງພວກເຂົາໄດ້ຮັບການຕອບສະໜອງ.

**2ໂກຣິນໂທ 11:14** *"ການເຮັດຢ່າງນັ້ນບໍ່ເປັນການປະຫລາດຫຍັງດອກ ເພາະຊາຕານເອງກໍຍັງປອມຕົວເປັນເທວະດາຂອງຄວາມສະຫວ່າງໄດ້."*

ຜີຮ້າຍເຫລົ່ານີ້ໄດ້ຮັກສາອຳນາດຂອງມັນໄວ້ເປັນເວລາຫລາຍສັດຕະວັດມາແລ້ວ ໂດຍ:

ງານບຸນຕ່າງໆທາງສາສະໜາ, ພິທີການຕ່າງໆ ແລະການຂາບໄຫວ້ສາສະໜາສະຖານຕ່າງໆ. ອຳນາດຝ່າຍວິນຍານໄດ້ຖືກຂະຫຍາຍອອກໄປເລື້ອຍໆໃນຂະນະທີ່ກິດຈະກຳເຫຼົ່ານີ້ຍັງດຳເນີນຢູ່; ການກົດຂີ່ ການຂົ່ມເຫັງກໍເພີ່ມຂຶ້ນ, ສັນຍານ ແລະອັດສະຈັນຕ່າງໆຈາກຜີຮ້າຍກໍເພີ່ມຂຶ້ນດ້ວຍ.

GCI

ກ) ພວກເຂົາຍັງຢືນຢັນທີ່ຈະເລືອກທາງເກົ່າທີ່ບັນພະບູລຸດຂອງພວກເຂົາໄດ້ເລືອກນັ້ນ ທັງເປັນການຂະຫຍາຍສິດອໍານາດຂອງວິນຍານຊົ່ວໃນການປົກຄອງກຸ່ມຄົນ ແລະສະຖານທີ່ຕ່າງໆ.

ຂ) ເທດສະການຕ່າງໆ, ພິທີການ ແລະການຂາບໄຫວ້ສສະໜາສະຖານຕ່າງໆນັ້ນ ເອີ້ນວ່າ, "ຮີດຄອງປະເພນີ." ປະເພນີເຫລົ່ານີ້ແຫລະທີ່ເຮັດໃຫ້ຊາຕານສາມາດຮັກສາອໍານາດຄອບຄອງຂອງມັນໄວ້ໄດ້.

ຄ) ເວດມົນຄາຖາ, ລັດທິບູຊາຊາຕານ ແລະ ສາສະໜາຕ່າງໆແຫ່ງຍຸກສະໄໝໃໝ່ ຊຶ່ງເປັນການເຊື້ອເຊີນວິນຍານມາຮ່ວມນໍາ. ພວກເຂົາໄດ້ມອບອໍານາດຄອບຄອງ ຝ່າຍວິນຍານດ້ວຍຄາຖາຕ່າງໆ, ຄໍາສາບແຊ່ງ, ພິທີການຕ່າງໆ ແລະ ເຄື່ອງອາຄົມຕ່າງໆ.

7. ປ້ອມອັນເຂັ້ມແຂງຂອງ<u>**ຄຣິສຕະຈັກ**</u>

**ຄາລາເຕຍ 5:20; ສຸພາສິດ 6:19**

ຄວາມເຊື່ອຖືທີ່ແຕກເປັນພັກເປັນພວກ: (ເປັນພັກເປັນພວກ - ແມ່ນກຸ່ມຄົນໃດໜຶ່ງທີ່ມີ ມູມມອງແຕກຕ່າງຈາກຄົນອື່ນໆໃນກຸ່ມໃຫຍ່.)

ກ) **ການແບ່ງແຍກ**ຖ່າມກາງຄຣິສຕະຈັກຕ່າງໆ

ຂ) **ຄວາມອວດ (ຈອງຫອງ)** ໃນຫລັກຄໍາສອນ ແລະ ຄວາມເຊື່ອຖື

ຄ) ການຂາບໄຫວ້ຮູບເຄົາລົບຂອງ**ຄະນະນິກາຍ**ຕ່າງໆ ຫລື ຫລັກຄວາມເຊື່ອໃດ ໜຶ່ງທີ່ເຮັດໃຫ້ເກີດການແຕກແຍກອອກຈາກສ່ວນອື່ນໆຂອງພະກາຍ.

ງ) **ການແຕກແຍກກັນ**ລະຫວ່າງຄຣິສຕະຈັກ (ພວກເຮົາ) ກັບເມືອງ (ພວກເຂົາ).

# V. ສົງຄາມຂອງພວກເຮົາ

## *ກ. ສິ່ງທຳອິດ – <u>ມັດ</u>ຄົນທີ່ແຂງແຮງ*

***ມັດທາຍ 12:28-29***

*"ແຕ່ຖ້າເຮົາຂັບໄລ່ຜີອອກດ້ວຍພະວິນຍານຂອງພະເຈົ້າ ດັ່ງນັ້ນ ຣາຊະອານາຈັກຂອງ ພະເຈົ້າກໍມາເຖິງພວກທ່ານແລ້ວ ຫລື ໃຜຈະເຂົ້າໄປໃນເຮືອນຂອງຄົນແຂງແຮງ ແລະຈະປຸ້ນເອົາຊັບຂອງເພິ່ນໄດ້ຢ່າງໃດ ເວັ້ນໄວ້ແຕ່ມັດຄົນແຮງແຂງນັ້ນໄວ້ເສຍກ່ອນແລ້ວ ຈິ່ງຈະປຸ້ນເອົາຊັບໃນເຮືອນຂອງເພິ່ນໄດ້."*

**"ການຂັບໄລ່ຜີຮ້າຍ" ເປັນອີກສ່ວນໜຶ່ງທີ່ເຮັດໃຫ້ລາຊະອານາຈັກຂອງພະເຈົ້າຂະຫຍາຍ.**

- "**ຄົນແຂງແຮງ**" ວິນຍານຊົ່ວ ແລະວິນຍານອື່ນໆທີ່ອາໃສຢູ່ ແລະຄອບຄຸມເຮືອນ.

- "**ເຮືອນຂອງຄົນແຂງແຮງ**" ຫລື "**ທີ່ໝັ້ນ**" ຫລື "**ເຂດປົກຄອງ**" ແມ່ນບຸກຄົນ, ຄອບຄົວ, ກຸ່ມຄົນ, ຜູ້ຄົນ, ຊົນຊາດ ຫລື ເຂດປົກຄອງທາງພູມສາດ ຊຶ່ງວິນຍານຊົ່ວ ຫລື ວິນຍານ ອື່ນໆຍຶດ ຫລື ຄອບຄຸມຢູ່.

**ການສັ່ງຜູກມັດ ແລະ ການແກ້ມັດ**

**ມັດທາຍ 16:19** *"ເຮົາຈະມອບຂໍກະແຈແຫ່ງແຜ່ນດິນສະຫວັນໄວ້ໃຫ້ທ່ານ **ທ່ານຈະຜູກມັດ**ສິ່ງໃດໄວ້ໃນໂລກ, ສິ່ງນັ້ນກໍຈະຊົງຜູກມັດໄວ້ແລ້ວໃນສະຫວັນ **ທ່ານຈະແກ້**ສິ່ງໃດໃນໂລກ, ສິ່ງນັ້ນກໍຊົງແກ້ໃຫ້ຫລຸດແລ້ວໃນສະຫວັນ."*

**ມັດທາຍ 12:29** ***"ເວັ້ນໄວ້ແຕ່ຈະມັດຄົນແຮງແຂງນັ້ນໄວ້ເສຍກ່ອນ."***

**ມັດທາຍ 18:18** *"ເຮົາບອກພວກທ່ານຕາມຄວາມຈິງວ່າ ສິ່ງໃດໆພວກທ່ານຈະຜູກມັດໄວ້ໃນໂລກ ກໍຈະຊົງຜູກມັດໄວ້ແລ້ວໃນສະຫັວນ ສິ່ງໃດໆພວກທ່ານຈະແກ້ໃນໂລກກໍຈະຊົງແກ້ໃຫ້ຫລຸດເສຍແລ້ວໃນສະຫວັນເໝືອນກັນ."*

- **ການຜູກມັດ**

ການຜູດ, ມັດ, ການຮັດ

ກ) ການມັດ, ຮັດດ້ວຍໂສ້, ການໃສ່ໂສ້

ຂ) ໂດຍອຸປະມາ:

(i) ການມັດ, ເຮັດໃຫ້ຢູ່ໃຕ້ພັນທະ, ການໃຊ້ກົດ, ໜ້າທີ່ ແລະ ອື່ນໆ.

(ii) ການຫ້າມ, ການບໍ່ອະນຸຍາດ, ເປັນການປະກາດວ່າ ຜິດກົດໝາຍ.

- **ການສັ່ງແກ້**

ເປັນການປົດປ່ອຍຄົນ(ຫລືສິ່ງຂອງຕ່າງໆ)ທີ່ຖືກມັດ ຫລື ຮັດຢູ່.

ເປັນແກ້ມັດຜູ້ທີ່ຖືກມັດ, ໝາຍເຖິງ ການແກ້ມັດ, ການປົດປ່ອຍຈາກການຖືກມັດ, ປ່ອຍ ໃຫ້ເປັນອິດສະຫລະ.

GCI

ກ) ເປັນການປົດປ່ອຍອອກຈາກຄຸກ, ປ່ອຍໄປ

ຂ) ກ່ຽວກັບການອອກໄປ, ການໝົດສິດອຳນາດ, ໂດຍກົດ ຫລື ການກະທຳ

ຄ) ເປັນການປະກາດວ່າຜິດກົດໝາຍ

## *ຂ. ວິນຍານຊື່ອຖືກຜູກມັດ ໃນຂະນະທີ່ເຮົາ<u>ເຊື່ອຟັງ</u>ພະອົງ*

1. **ຈົ່ງຍອມຈຳນົນ** ຕໍ່ "ຜູ້ບັນຊາການກອງທັບຂອງພະເຈົ້າ" **ໂຢຊວຍ 5:13-15**

2. **ຈະບໍ່ສາມາດຮິບ**ກັບສັດຕູຂອງທ່ານໄດ້ ຫາກມີການບາບໃນຄ້າຍພັກ
**ໂຢຊວຍ 6:2; 7:11-13**

**ພະບັນຍັດສອງ 8:1, 2**
*"ພະບັນຍັດທັງຫລາຍທີ່ຂ້າພະເຈົ້າໄດ້ມອບໃຫ້ພວກເຈົ້າໃນມື້ນີ້ ຈົ່ງເຮັດຕາມຢ່າງສັດຊື່ ເພື່ອພວກເຈົ້າຈະມີຊີວິດຢູ່ ແລະມີຈຳນວນຄົນຫລາຍ. ພວກເຈົ້າຈະຍຶດຄອງເອົາດິນແດນ ທີ່ພະຜູ້ເປັນເຈົ້າໄດ້ສັນຍາກັບປູ່ຍ່າຕາຍາຍຂອງພວກເຈົ້າ. ຈົ່ງລະນຶກວ່າ ພະຜູ້ເປັນເຈົ້າອົງເປັນພະເຈົ້າຂອງພວກເຈົ້າໄດ້ນຳພາພວກເຈົ້າຜ່ານຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີຢ່າງໃດ. ພະອົງໄດ້ທົດສອບພວກເຈົ້າໃນຄວາມທຸກຍາກລຳບາກຄືກັນ ເພື່ອຢາກຈະຢັ່ງຮູ້ຈິດໃຈຂອງພວກເຈົ້າວ່າເປັນຢ່າງໃດ ແລະ ພວກເຈົ້າຈະເຊື່ອຟັງຂໍ້ຄຳສັ່ງຂອງພະອົງຫລືບໍ່."*

ກ) ຂໍ້ 1: **<u>ການເຊື່ອຟັງ</u>** ແມ່ນສິ່ງທີ່ຈຳເປັນຫລາຍ:

(i) ເພື່ອຊີວິດ

(ii) ເພື່ອໃຫ້ໄດ້ຄອບຄອງດິນແດນ

ຂ) ຂໍ້ 2: ຈຸດປະສົງທີ່ປ່ອຍໃຫ້ເດີນທາງໃນຖິ່ນແຫ້ງແລ້ງ:

(i) ເພື່ອໃຫ້ເຮົາເອງ**<u>ຖ່ອມຕົວລົງ</u>**. ຄວາມຈອງຫອງຂອງພວກເຮົາຈຳເປັນຕ້ອງຖືກກຳຈັດອອກໄປ.

(ii) ເພື່ອ**<u>ທົດສອບ</u>**ເຮົາ. ເພື່ອຈະຮູ້ວ່າມີຫຍັງຢູ່ໃນໃຈຂອງເຮົາ.

3. ສິ່ງທີ່ອົງພະຜູ້ເປັນເຈົ້າໃຫ້ຄວາມສົນພະໄທທີ່ສຸດ ແມ່ນ **ລັກສະນະນິໃສພາຍໃນ**, ຄວາມບໍລິສຸດ.

**ໂຣມ 5:3-4**
*3 ຫລາຍກວ່ານັ້ນອີກ ພວກເຮົາກໍຊົມຊື່ນຍິນດີ ໃນຄວາມຍາກລຳບາກດ້ວຍ ເພາະຮູ້ແລ້ວວ່າ ຄວາມຍາກລຳບາກນັ້ນເຮັດໃຫ້ເກີດມີຄວາມອົດທົນ. 4 ແລະ ຄວາມອົດທົນນັ້ນເຮັດໃຫ້ເຮົາເປັນຄົນທີ່ພະເຈົ້າຊົງເຫັນຊອບ ແລະ ການທີ່ຊົງເຫັນຊອບນັ້ນເຮັດໃຫ້ມີຄວາມໄວ້ວາງໃຈ.*

- ຖິ່ນແຫ້ງແລ້ງກັນດານ ຄື **ບ່ອນຝັງສົບ** ຂອງຄົນໝົດທັງລຸ້ນ(ເກົ່າ)ທີ່ຍັງສືບຕໍ່ຈົ່ມທຸກໃຈຮ້າຍ ແລະ ບໍ່ໄດ້ຮຽນຮູ້ທີ່ຈະໄວ້ວາງໃຈ ແລະເຊື່ອຟັງອົງພະຜູ້ເປັນເຈົ້າ. ພວກເຂົາມີແຕ່ຢາກຈະກັບໄປຫາທາງເກົ່າໆຂອງພວກເຂົາຢູ່ຕະຫລອດ.

GCI

- ຖິ່ນແຫ້ງແລ້ງດຽວກັນນີ້ຍັງເປັນ **ບ່ອນໃຫ້ຊີວິດ** ແກ່ຄົນໝົດທັງລຸ້ນ(ໃໝ່)ໄດ້ເກີດມາ ແລະເຕີບໃຫຍ່ຂຶ້ນຖ່າມກາງຄວາມຫຍຸ້ງຍາກລຳບາກຕ່າງໆ. ພວກເຂົາບໍ່ຮູ້ຈັກຫຍັງ ນອກຈາກການຮຽນຮູ້ທີ່ຈະໄວ້ວາງໃຈ ແລະເຊື່ອຟັງອົງພະຜູ້ເປັນເຈົ້າ ໃນຖ່າມກາງຄວາມຫຍຸ້ງຍາກລຳບາກເຫລົ່ານັ້ນ ແລະ ກຽມພ້ອມກັບການປ່ຽນແປງໃໝ່. ພວກເຂົາພ້ອມແລ້ວທີ່ຈະສູ້ເພື່ອພະສັນຍາຂອງພະເຈົ້າ.

4. **ການຕັດສິນໃຈຂອງທ່ານ - ການຕອບສະໜອງຂອງທ່ານ**ຕໍ່ຄວາມຫຍຸ້ງຍາກລຳບາກ ຈະເປັນໂຕກຳນົດວ່າໃນຄວາມຫຍຸ້ງຍາກນັ້ນໆ ຈະເປັນບ່ອນເກີດແຫ່ງ**ຊີວິດ ຫລື ຈະເປັນ ບ່ອນຝັງ**ທ່ານ.

**ຄາລາເຕຍ 5:17;** **ລູກາ 9:23**
**ໂຣມ 6**

ໄຊຊະນະໃນການຣົບນີ້ - ຄື ການຮຽນຮູ້ທີ່ຈະເຊື່ອຟັງ.

ຫາກເປັນຢ່າງນັ້ນແລ້ວກໍສະແດງວ່າ, ຂ້າພະເຈົ້າພ້ອມແລ້ວທີ່ຈະຂ້າມແມ່ນ້ຳຢໍແດນ ແລະເລີ່ມສົງຄາມຝ່າຍວິນຍານກັບຜູ້ປົກຄອງ ແລະອຳນາດຕ່າງໆ ເພື່ອຍຶດເອົາດິນແດນກັບມາເພື່ອອານາຈັກຂອງພະເຈົ້າ.

ອານາຈັກຂອງພະເຈົ້າ ≈ ຄວາມເປັນເຈົ້າອຳນາດ ≈
ການປົກຄອງເໜືອ / ປົກຄອງ.

5. **ການເຊື່ອຟັງ**ເຮັດໃຫ້ທ່ານມີສິດອຳນາດ

**ມັດທາຍ 10:1, 78** **ລູກາ 10:17-20**

*"5 ຄົນສາມາດລົບກັບສັດຕູ 100ຄົນໄດ້ ແລະ 100 ຄົນສາມາດລົບສັດຕູ 10,000 ຄົນໄດ້"*
**ລະບຽບພວກເລວີ 26:1-13**

- ຫາກພວກເຮົາບໍ່ເຊື່ອຟັງພະອົງ ພະອົງກໍບໍ່ສາມາດຊ່ອຍພວກເຮົາໃຫ້ພົ້ນຈາກບ້ວງແຮ້ວຂອງສັດຕູໄດ້.

  *"ເຫດສັນໃດ ທ່ານທັງຫລາຍຈຶ່ງເອີ້ນເຮົາວ່າ, ນາຍ, ນາຍ. ແຕ່ບໍ່ໄດ້ເຮັດຕາມສິ່ງທີ່ເຮົາບອກນັ້ນ."*
  **ລູກາ 6:46-49**

- *"ລາຊະອານາຈັກຂອງພະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່"*
  **(ມາລະໂກ 1:14-15)**

  ການຖິ້ມໃຈເກົ່າເອົາໃຈໃໝ່ແມ່ນການຫັນໜີຈາກທາງເກົ່າ - ເປັນການປ່ຽນທິດທາງຊີວິດຂອງທ່ານ.

  ການຖິ້ມໃຈເກົ່າເອົາໃຈໃໝ່ ແມ່ນ ການຕັດສິນໃຈທີ່ຈະເຊື່ອຟັງ, ເປັນການຕອບສະໜອງດ້ວຍຄວາມເຕັມໃຈ (ຕັ້ງໃຈ)ຂອງຄົນນັ້ນໆ.

- *ພະເຈົ້າຊົງຕໍ່ສູ້ເພື່ອໄພ່ພົນຂອງພະອົງ. ຫາກພວກເຮົານຳໃຊ້ຄຳວ່າ:*
  "ພະອົງຈະຊົງເຮັດເທິງແຜ່ນດິນໂລກນີ້ ເໝືອນຢ່າງໄດ້ເຮັດແລ້ວທີ່ແຜ່ນດິນສະຫວັນ."

GCI

## *ດ. ຈົ່ງສວມຍຸດທະພັນຄົບຊຸດຊຶ່ງມາຈາກພະເຈົ້າ*

**ເອເຟໂຊ 6:11-17**

ເປັນການປົກປ້ອງຄວາມຄິດຂອງພວກເຮົາ (ຊຶ່ງເປັນສະໜາມຣົບ) ເພື່ອຮັກສາຄວາມຄິດຈິດໃຈຂອງເຮົາໃຫ້ເປັນອິດສະລະ.

1. **ເອົາຄວາມຈິງຄາດແອວ**ຂອງທ່ານໄວ້ **ໂຢຮັນ 8:31-32; 14:6; ເພງສັນລະເສີນ 119:160**

   ພະອົງຊົງເປັນ: ຜູ້ມີອຳນາດສູງສຸດ - ລິດເດດ - ສິດ - ສະຕິປັນຍາ - ຄວາມຮັກ - ພະຄຸນ. ສິ່ງທີ່ພະອົງໄດ້ເຮັດມາແລ້ວ ແລະ ສິ່ງທີ່ກຳລັງຈະເຮັດ. ຊົງກ່າວແຕ່ຄວາມຈິງຕະຫລອດ. ຄຳຕົວະເປັນການເປີດປະຕູໃຫ້ກັບຄວາມຜ່າຍແພ້.

   **ເພງສັນລະເສີນ 15:12; ເອເຟໂຊ 4:15, 24-27; ໂກໂລຊາຍ 3:9**
   **ໂຢຮັນ 8:44** *"... ພໍ່ ... ເປັນພໍ່ຂອງການຕົວະ";* **ກິດຈະການ 5:1-5** ອານາເນຍ & ຊະຟີລາ

2. **ເອົາຄວາມຊອບທຳເປັນເຄື່ອງປ້ອງກັນເອິກ** ປົກປ້ອງຫົວໃຈ. **ສຸພາສິດ 4:23**

   - ທຳອິດ: ຕ້ອງມີຄວາມເຊື່ອໃນຄວາມຊອບທຳຂອງພະອົງ.
     **ຟີລິບປອຍ 3:9**
     **2ໂກຣິນໂທ 5:21**
     **1 ເທຊະໂລນິກ 5:8**

   - ຫລັງຈາກນັ້ນ: ຈົ່ງເປັນບໍລິສຸດ" **ການດຳເນີນຊີວິດທີ່ບໍລິສຸດ**
     **1ເປໂຕ 1:13-16 ເອເຟໂຊ 4:24;**
     **1ຕີໂມທຽວ 6:11;**
     **1ໂຢຮັນ 2:29; 3:3,7,10**

   - ຊີວິດທີ່ໄຊຊະນະ ເລີ່ມຈາກຊີວິດທີ່ບໍລິສຸດເສຍກ່ອນ.

     "ພະອົງເຈົ້າໄດ້ຊົງໂຜດເຮົາໃຫ້ພົ້ນຈາກອຳນາດແຫ່ງຄວາມມືດ." ການຍອມຢູ່ໃຕ້ຄວາມມືດ ແມ່ນການມອບສິດໃຫ້ແກ່ຊາຕານໄດ້ຄອບຄອງ.

     **ລູກາ 11:35-36** *"ເຫດສັນນັ້ນ ຈົ່ງລະວັງໃຫ້ດີ ຢ້ານວ່າຄວາມສະຫວ່າງທີ່ມີຢູ່ໃນທ່ານນັ້ນມືດໄປ."*

     ວິນຍານຊົ່ວສາມາດຍ່າງເຂົ້າໄປໃນທຸກໆພື້ນທີ່ຂອງຄວາມມືດໄດ້. ພາກສ່ວນ (ພື້ນທີ່)ໃດກໍຕາມທີ່ມີການຝ່າຝືນ (ບໍ່ເຊື່ອຟັງ) ພະທຳຂອງພະເຈົ້າ, ທີ່ນັ້ນກໍຈະເກີດມືດມົວຝ່າຍວິນຍານ ແລະເກີດການເຄື່ອນໄຫວຂອງວິນຍານຊົ່ວພາຍໃນ.

   - ມີແຕ່ຜູ້ທີ່ມີ**ໃຈບໍລິສຸດ ແລະ ກຽດຊັງຄວາມຊົ່ວ**ເທົ່ານັ້ນ ຈຶ່ງສາມາດໄປມາໄດ້ຢ່າງອິດສະຫລະພາບ ແລະ ບໍ່ຕົກຢູ່ໃນເຂດປົກຄອງຂອງສັດຕູ.

**ເພງສັນລະເສີນ 97:10**
***10*** *ພະຜູ້ເປັນເຈົ້າຮັກພວກທີ່ຊັງຄວາມຊົ່ວນ້ອງໜອງ ພະອົງຄຸ້ມຄອງຊີວິດຂອງປະຊາຊົນຂອງພະອົງໄວ້. ຝ່າຍຝູງຊົນຂອງພະເຈົ້າ ພະອົງກໍຊ່ອຍກອບກູ້ເອົາຈາກອຳນາດຂອງຄົນຊົ່ວຮ້າຍ.*
**ສຸພາສິດ 8:13**
***13*** *ການຢຳເກງພະຜູ້ເປັນເຈົ້າແມ່ນກຽດຊັງສິ່ງທີ່ຊົ່ວ ສຳລັບຕົວເຮົາເອງນັ້ນ ເຮົາກຽດຊັງສິ່ງເຫລົ່ານີ້ເດີ້ ຄື ການຈອງຫອງຟອງຕົວຂຶ້ນ ແລະການອວດດີອວດເດັ່ນ ເປັນການປະພຶດໃນທາງຊົ່ວຮ້າຍ ແລະເປັນຄຳເວົ້າອັນບໍ່ຈິງ.*

- ຄວາມຈອງຫອງຟອງຕົວຂຶ້ນເປັນການເປີດປະຕູໃຫ້ກັບຊາຕານ. **ລູກາ 22:23-24, 31-32**
  ການຕົກໃນການບາບ. (**ຢາໂກໂບ 4:6-7**)
  ຜົນກໍຄື: ຄວາມຖ່ອມຕົວ **ກິດຈະການ 3:12ຂ**

- ກ່ອນທີ່ພວກເຮົາຈະເຮັດເສີກ, ພວກເຮົາຕ້ອງຮູ້ຈັກ - ພື້ນທີ່ຕ່າງໆທີ່ເຮົາເຊື່ອງ ຄວາມມືດເອົາໄວ້ ຊຶ່ງເປັນພື້ນທີ່ທີ່ເຮົາຕ້ອງຊະນະໃຫ້ໄດ້ໃນອະນາຄົດ.
  **1ເປໂຕ 5:5-9**

- ເພື່ອຈະໄດ້ໄຊຊະນະນັ້ນ ມັນຮຽກຮ້ອງໃຫ້ມີການຊົງສະຖິດຢູ່ນຳຂອງພະອົງ.
  **ອົບພະຍົບ 33:14; ເພງສັນລະເສີນ 15; 24:3-6**

  **ອົບພະຍົບ 33:14**
  *14 ພະຜູ້ເປັນເຈົ້າຈຶ່ງຕອບວ່າ "ເຮົາຈະນຳພາພວກເຈົ້າໄປ ແລະເຈົ້າຈະໄດ້ໄຊຊະນະ"*

- ຊາຕານບໍ່ສາມາດກ່າວຫາ ແລະ ນຳເອົາມົນທິນມາສູ່ຈິດສຳນຶກທີ່ໄສສະອາດໄດ້.

  **1ຕີໂມທຽວ 1:5, 19; 3:9; 1ເປໂຕ 3:16,18,21**

3. ເອົາຄວາມພັ້ງພ້ອມຝ່າຍ**ຂ່າວປະເສີດເລື່ອງສັນຕິສຸກ**ມາສຸບໃສ່ຕີນ

*ກຽມ ແລະພ້ອມສະເໝີທີ່ຈະໄປທຸກຫົນແຫ່ງ, ປະກາດ (ສັ່ງສອນ) ທຸກເວລາ. ຄວາມສາມາດໃນການໄປມາ.*

*ມາລະໂກ 16:15 "ທ່ານທັງຫລາຍຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸດສະໂລກທັງໝົດ."*

*ເອຊາຢາ 52:7 ເປັນຕາໜ້າຮັກແທ້ ທີ່ເຫັນຜູ້ສົ່ງຂ່າວພວມຂ້າມພູທັງຫລາຍມາ ໂດຍນຳເອົາຂ່າວດີ ຄື ຂ່າວແຫ່ງສັນຕິສຸກມາໃຫ້."*

4. **ຍົກເອົາຄວາມເຊື່ອເປັນເຂນ**

- ເປັນເຄື່ອງປ້ອງກັນ: **ສຸພາສິດ 30:5; 2:7; ເພງສັນລະເສີນ 3:3; 28:7; ໂຣມ 10:17**

  ການໄວ້ວາງໃຈໃນພະເຈົ້ານັ້ນ ຄື ການທີ່ເຮົາປ່າວປະກາດພະສັນຍາຂອງພະເຈົ້າຕໍ່ຄຳຕິວະ ແລະການບິນເບືອນຄວາມຈິງຂອງຊາຕານ.

- ເຄື່ອງປະທະ: ໃຊ້ເພື່ອເບິ່ງໄປຂ້າງໜ້າ - ໄປໜ້າ.
  **ເຮັບເຣີ 11:1, 33-34; ເພງສັນລະເສີນ 37:3,5; 1 ໂຢຮັນ 5:4-5**

5. **ເອົາຄວາມຜົ້ນເປັນເຄື່ອງຄຽນປ້ອງຫົວໄວ້**

ເປັນການປົກປ້ອງຄວາມຄິດຈິດໃຈຂອງເຮົາ (ຊຶ່ງເປັນສະໜາມຮົບ) ເພື່ອຮັກສາຄວາມ ຄິດຈິດໃຈຂອງເຮົາໃຫ້ເປັນອິດສະຫລະ.

**2ໂກຣິນໂທ 4:4** *"ສ່ວນຄົນເຫລົ່ານັ້ນທີ່ບໍ່ເຊື່ອ ພະຂອງສະໄໝນີ້ໄດ້ເຮັດໃຫ້ໃຈຂອງເຂົາມືດໄປ ເພື່ອບໍ່ໃຫ້ເຂົາເຫັນແສງສະຫວ່າງຂອງຂ່າວປະເສີດເລື່ອງພະສະງ່າລາສີຂອງພະຄຣິດ ຜູ້ຊົງມີລັກສະນະຢ່າງພະເຈົ້າ."*

**2ໂກຣິນໂທ 10:45** *"ເພາະວ່າ ເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີຣິດອຳນາດຈາກພະເຈົ້າ ອາດທຳລາຍຄ້າຍອັນເຂັ້ມແຂງໄດ້ ຄື ທຳລາຍຄວາມຄຶດທີ່ມີເຫດຜົນອັນບໍ່ຈິງ ແລະ ຄວາມຄົ້ດຶງທຸກປະການທີ່ຕັ້ງຕົວຂຶ້ນຂັດຂວາງຄວາມຮູ້ຈັກພະເຈົ້າ ແລະປາບຄວາມຄຶດທຸກປະການລົງໃຫ້ຢູ່ໃຕ້ບັງຄັບ ຈົນເຖິງນ້ອມຟັງພະຄຣິດ."*

ເຮົາໄດ້ປົກປ້ອງທຸກໆບ່ອນແລ້ວ ຍົກເວັ້ນແຕ່ . . . ທາງຫລັງ.

ກ) ຢ່າຫັນກັບຫລັງຈັກເທື່ອ, ຢ່າຍອມແພ້, ຢ່າທໍ້ຖອຍ.

ຂ) ທະຫານໂຣມຈະຮົບເສິກໂດຍເຮັດເປັນຕຸ້ມແຖວຖີ່ໆກັນ ແລະມີໂລ້ຫ້ອງກັນພວກເຂົາພ້ອມ. ຈົ່ງຊອກຫາຈຸດຢືນຂອງທ່ານໃນພະກາຍ, ໃນກອງທັບຂອງພະອົງ ຈົ່ງຢືນຢູ່ນຳກັນ.

## *໒. ອາວຸດຝ່າຍວິນຍານຂອງພວກເຮົາສຳລັບການຮົບເສິກ*

**2ໂກຣິນໂທ 10:3-5**

*"ເພາະວ່າອາວຸດຂອງເຮົາບໍ່ເປັນຝ່າຍໂລກ . . . ມີລິດອຳນາດຈາກພະເຈົ້າ ອາດທຳລາຍຄ້າຍ ອັນເຂັ້ມແຂງໄດ້,*

**1ໂກຣິນໂທ 15:57** ໄດ້ຊົງປະທານໄຊຊະນະໃຫ້ແກ່ເຮົາທັງຫລາຍແລ້ວ!

1. <u>**ຄຳອະທິຖານ**</u> ເປັນກຸນແຈສຳຄັນ

**ຫາກພວກເຂົາບໍ່ອະທິຖານ, ພະອົງກໍຈະບໍ່ກະທຳການຫຍັງ. ຍ້ອນຫຍັງ???**

GCI

- ເມື່ອຕົ້ນເດີມນັ້ນ ພະເຈົ້າໄດ້ມອບສິດອຳນາດໃນການປົກຄອງໂລກນີ້ໃຫ້ແກ່ມະນຸດ. ຄວາມຈິງຂໍ້ນີ້ບໍ່ເຄີຍຖືກລຶບລ້າງ ຫລື ຖອນອອກຈັກເທື່ອ.

    ກ) **ປະຖົມມະການ 1:28**

    ຂ) **ເພງສັນລະເສີນ 115:16; 8:4–8**

    ຄ) **ເຮັບເຣີ 2:5–8**

- ແລ້ວສະຫວັນຍັງຄອຍຢູ່: **ເຮັບເຣີ 10:13**

    *ເຮັບເຣີ 10:13*
    *13 ເພື່ອຊົງຄອຍຢູ່ "ຈົນບັນດາສັດຕູຂອງພະອົງຖືກປາບລົງໃຕ້ພະບາດຂອງພະອົງ".*

    ຄອຍຖ້າ . . . . . . . . . . . . . . . . . . . . . . ຈົນກວ່າມະນຸດຈະ:
    ໃຈຮ້າຍພໍແລ້ວ
    ເຈັບເປັນພໍແລ້ວ
    ເມື່ອຍພໍແລ້ວ
    ເບື່ອໜ່າຍກັບການອະທິຖານແລ້ວ !!!
    ການເຫັນດີເຫັນພ້ອມກັບພະເຈົ້າ ⇒ ພໍ, ພຽງພໍແລ້ວ

- ການມາຢືນໃນຊ່ອງວ່າງແທນຄົນອື່ນ ⇒ ຄື ເມື່ອເຫັນວ່າ ບໍ່ມີຄົນໃດເອົາໃຈໃສ່ເລື່ອງການອະທິຖານເລີຍ:

    ກ) "ຂໍໃຫ້ລາຊະອານາຈັກຂອງພະອົງມາ, ຂໍໃຫ້ເປັນໄປຕາມ"

    **ອັນນີ້ແມ່ນຄຳຂໍເພື່ອ: ໃຫ້ແຜນການຂອງພະອົງທີ່ຖືກຂັດຂວາງມາ ຈົນຮອດດຽວນີ້. ອັນນີ້ໝາຍເຖິງ:**

    ແຜນການຂອງພະອົງເນື່ອງດ້ວຍໄພ່ພົນ

    (i) ການປຽວຢາຮັກສາຝ່າຍຈິດວິນຍານ **1ໂຢຮັນ 5:16**

    (ii) ການປຽວຢາຮັກສາຝ່າຍຮ່າງກາຍ **ຢາໂກໂບ 5:14–18**

    (iii) ຊົງຊ່ວຍເຫລືອປະຊາຊົນ **ໂຢເອນ 2:17**

    **ເພື່ອແຜນການຂອງພະອົງເນື່ອງດ້ວຍເມືອງ, ປະເທດ ແລະ ເຂດປົກຄອງຂອງພວກເຮົາ**

    (i) ຈົ່ງອະທິຖານເພື່ອຊົນຊາດຕ່າງໆ **1ຕີໂມທຽວ 2:18**

    (ii) ຈົ່ງອະທິຖານເພື່ອເມືອງຕ່າງໆ **ເຢເຣມີຢາ 29:7**

    (iii) ຈົ່ງອະທິຖານເພື່ອປະຊາຊົນ **2ຂ່າວຄາວ 7:14; ເພງສັນລະເສີນ 2:8; 111:6**

GCI

**ຈົ່ງຊອກຮູ້ນໍ້າພະໄທຂອງພະອົງຕໍ່ສະຖານະການຕ່າງໆ. ແລ້ວອະທິຖານເພື່ອນໍ້າພະໄທນັ້ນໆ ໃຫ້ເກີດເປັນຈິງ.**

**ເອຊາຢາ 9:7** *"....ລາຊະອຳນາດຂອງພະອົງນັ້ນຈະເພີ່ມຂຶ້ນຢູ່ສະເໝີ"*

**ເອເຟໂຊ 6:18** ເປັນການອ້ອນວອນ ຂໍໃຫ້ມີກຳລັງເໜືອກວ່າ ຄວາມສັບສົນວຸ້ນວາຍໃນໂລກນີ້ ເຊັ່ນ: **ຢາໂກໂບ 5:14-16**

ຂ) ການຍູ້ດັນຄວາມມືດ ເພື່ອຂະຫຍາຍອານາຈັກຂອງພະເຈົ້າ

ກຳນົດ (ວາງ) ເຂດແດນ. **ຈົດເຊັນບັນຊີ 33:50-55 ໂຢຊວຍ 1:3; 6:2**

ການອ້ອນວອນຂໍພະກະລຸນາ ໝາຍເຖິງ: ອ້ອນວອນຂໍຊັບສິນ ຫລື ສິດອື່ນໆທີ່ປະກາດວ່າເປັນຂອງຜູ້ອື່ນແບບບໍ່ຊອບ (ບໍ່ຖືກຕ້ອງ)
**ໂຢຊວຍ 19:11, 22, 26, 27, 34**

**ເພງສັນລະເສີນ 44:5** *"ເຫລົ່າສັດຕູໄດ້ພ່າຍແພ້ດ້ວຍອຳນາດຂອງພະອົງ... ແຕ່ພະອົງໄດ້ຊ່ອຍຂ້າພະອົງໃຫ້ພົ້ນຈາກເຫລົ່າສັດຕູ ຄື ຜູ້ທີ່ກຽດຊັງຂ້າພະອົງໃຫ້ພວກເຂົາພ່າຍແພ້."*

ຄ) *"ໂອ ພະຜູ້ເປັນເຈົ້າເອີຍ, ໂຜດສົງສານປະຊາຊົນຂອງພະອົງດ້ວຍ ຂໍຢ່າໃຫ້ຊົນຊາດອື່ນໝິ່ນປະໝາດພວກຂ້າພະອົງເລີຍ ໂດຍຖາມຫຍໍ້ຫຍັນວ່າ ພະເຈົ້າຂອງພວກເຈົ້າຢູ່ໃສແລ້ວ?"*
**ໂຢເອນ 2:17**

ງ) ເພື່ອຮ້ອງອອກຕໍ່ອົງພະຜູ້ເປັນເຈົ້າ ຂໍໃຫ້ພະອົງເປີດ (ອ້າ) ພະຫັດອັນບໍລິສຸດຂອງພະອົງ.

(i) ຊົງເປັນນັກຮົບ **ອົບພະຍົບ 15:3, 6, 12**

(iii) ພະຫັດຂອງເຮົາສັ້ນເຂົ້າຫລື?
**ເອຊາຢາ 50:2; 51:9; 52:10**

ຈ) ຄຳອະທິຖານປົດປ່ອຍທູດສະຫວັນ ແລະ ຜູກມັດວິນຍານຊົ່ວ

ໜ້າທີ່ຮັບຜິດຊອບຂອງເຫລົ່າທູດສະຫວັນກໍຄື :

(i) ນະມັດສະການ ແລະ ຮັບໃຊ້ອົງພະຜູ້ເປັນເຈົ້າ **ເຮັບເຣີ 1:4, 6-7**

(ii) "ຝູງເທວະດາທັງປວງນັ້ນ ແມ່ນວິນຍານຮັບໃຊ້ບັນດາຜູ້ທີ່ຈະໄດ້ຮັບຄວາມລອດພົ້ນເປັນມໍລະດົກ" **ເຮັບເຣີ 1:14**

ອັບຣາຮາມອະທິຖານເພື່ອໂລດ – ເຫລົ່າທູດສະຫວັນກໍຊ່ອຍໂລດ.
**ປະຖົມມະການ 19**

ເອລີຊາຖືກກຳລັງຂອງສັດຕູອ້ອມໄວ້. **2ກະສັດ 6:17**

ດານີເອນໃນຖໍ້າສິງ. **2ກະສັດ 6:17**

GCI

ດານີເອນຖືສິນອົດ ແລະ ອະທິຖານເປັນເວລາສາມອາທິດ.
**ດານີເອນ 10:2,13**

ເຮເສກີຢາອະທິຖານ, ແລ້ວເທວະດາກໍໄດ້ຂ້າທະຫານຂອງອັດຊີເລຍ ຕາຍ 185,000 ຄົນ.
**ເອຊາຢາ 37:21,36**

ຊົງໂຜດຊ່ອຍອັກຄະສາວົກໃຫ້ພົ້ນຈາກການຈຳຈອງ.
**ກິດຈະການ 5:19; 12:5-10**

2. "ພະແສງຂອງພະວິນຍານ ຄື **<u>ພະທຳ</u>**ຂອງພະເຈົ້າ"
ເອເຟໂຊ 6:17

ກ) ພະທຳເຕັມໄປດ້ວຍລິດເດດ

**ເຮັບເຣີ 4:12** *"...ປະກອບດ້ວຍຊີວິດແລະຣິດເດດ, ຄົມກວ່າດາບສອງຄົມທຸກດວງ ... "*

**ເອຊາຢາ 55:11** *". . . ຄືວ່າ ມັນຈະສຳເລັດຜົນໄດ້ຕາມທີ່ເຮົາໄດ້ວາງແຜນການ ມັນຈະກະທຳໃຫ້ເກີດຜົນ*

**ເຢເລມີຢາ 23:29** *". . ຖ້ອຍຄຳຂອງເຮົາເປັນດັ່ງໄຟ ແລະຄ້ອນຕີ . . . "*

**ພະນິມິດ 1:16** *"ມີພະແສງສອງຄົມອອກມາຈາກພະໂອດ"*

**1ເທຊະໂລນິກ 2:13** *"ເປັນພະທຳຂອງພະເຈົ້າທີ່ດຳເນີນງານຢູ່ພາຍໃນເຈົ້າທັງຫລາຍທີ່ເຊື່ອ."*

**ເພງສັນລະເສີນ 107:20** *"ໂດຍຄຳສັ່ງ ພະຍາດຂອງພວກເຂົາໄດ້ຫາຍໄປ."*

**ມັດທາຍ 8:8** *".... ແຕ່ຂໍກ່າວເທົ່ານັ້ນຄົນໃຊ້ຂອງຂ້ານ້ອຍກໍຈະດີພະຍາດ."*

ພະຄຳຂອງພະອົງ (ເຣມາ) *ການຊົງສຳແດງ* ມີມາໂດຍທາງຄວາມສຳພັນອັນຊິດໃກ້ / ຄຳອະທິຖານ.
**ເອເຟໂຊ 6:18**

(i) ເຮົາພ້ອມແລ້ວທີ່ຈະໃຫ້ຖ້ອຍຄຳຂອງເຮົາກາຍເປັນຈິງ.
**ເຢເລມີຢາ 1:7-9, 12, 17**

(ii) ເອລີຢາຢຸດຝົນ
**ຢາໂກໂບ 5:17; ແລະ 1ກະສັດ 17:1; 18:1**

GCI

ຂ) ຕຽມພ້ອມທີ່ຈະໃຊ້ພະຄໍາ.

ເພື່ອຢຸດການເຈັບເປັນຕ່າງໆ
ເພື່ອຢຸດວິນຍານຊົ່ວບໍ່ໃຫ້ມີການເຄື່ອນໄຫວໃດໆເໜືອຊີວິດຂອງຄົນນັ້ນໆ.

ພວກເຮົາຈະຕ້ອງອົດສາພະຍາຍາມໃນທຸກໆກິດຂອງລາຊະອານາຈັກ.ພວກເຮົາຈະຕ້ອງສືບຕໍ່ເຮັດສິ່ງເຫລົ່ານີ້ຈົນກວ່າຈະເຫັນຄໍາຕອບ.

ຕົວຢ່າງ: **ມັດທາຍ 7:1-11; ລູກາ 11:1-10; 18:17**
ພວກເຮົາຕ້ອງສືບຕໍ່ສັ່ງຜູກມັດ (ຢຸດ) ແລະ ແກ້ມັດ (ປ່ອຍ) ຈົນກວ່າສິ່ງທີ່ເຮົາກໍາລັງປ່າວປະກາດນັ້ນຈະເກີດເປັນຈິງ.

ງານປະກາດຂ່າວປະເສີດທີ່ສໍາເລັດຜົນນັ້ນຈະເຮັດໃຫ້ຄຣິສຕະຈັກຈະເລີນຂຶ້ນ ສ່ວນການຂະຫຍາຍອານາຈັກຂອງພະເຈົ້ານັ້ນແມ່ນຂຶ້ນກັບສົງຄາມຝ່າຍວິນຍານ.

ວິນຍານຊົ່ວຈະຖືກຜູກມັດ ແລະ ການຮັກສາໃນຊີວິດຂອງພວກເຮົາ ແລະຊີວິດຂອງຄົນອື່ນໆຈະເກີດຂຶ້ນ ຫາກພວກເຮົານໍາໃຊ້:

3. ພະນາມຂອງ**<u>ພະເຢຊູ</u>**

**ຟີລິບປອຍ 2:9-11; ກິດຈະການ 3:6; 15-16; 4:10; 9:34; 16:16-18**

**1ຊາມູເອນ 17:45; ມາຣະໂກ 16:17; ໂຣມ 10:13**

***1ຊາມູເອນ 17:45***
*45 ດາວິດຕອບວ່າ "ເຈົ້າມາຕໍ່ສູ້ນໍາຂ້ອຍດ້ວຍດາບ, ຫອກ, ແລະ ຫລາວ, ແຕ່ຂ້ອຍມາຕໍ່ ສູ້ກັບເຈົ້າໃນນາມຂອງພະຜູ້ເປັນເຈົ້າ ອົງຊົງຣິດອໍານາດຍິ່ງໃຫຍ່ ຜູ້ເປັນພະເຈົ້າຂອງກອງທັບອິສະຣາເອນທີ່ເຈົ້າໄດ້ເວົ້າທ້າທາຍນັ້ນ."*

**2ຂ່າວຄາວ 14:11** **ເພງສັນລະເສີນ 44:5**

4. ລິດເດດຂອງ**<u>ຄໍາສັນລະເສີນ</u>**

| | |
|---|---|
| **ເພງສັນລະເສີນ 22:3** | *"ພະເຈົ້າຊົງປະທັບຢູ່ທ່າມກາງຄໍາສັນລະເສີນ"* |
| **ອົບພະຍົບ 15:10-11** | *"ຄວາມສູດຍອດໃນຄໍາສັນລະເສີນ"* |
| **ເພງສັນລະເສີນ 149** | *ເອຊາຢາ 42:10-13* |
| **ເພງສັນລະເສີນ 8:2** | |
| **ເພງສັນລະເສີນ 76:1-3** | ຢູດາ = ການສັນລະເສີນ |
| **ກິດຈະການ 16:22** | **2ຂ່າວຄາວ 20:22** |

GCI

5. ລິດເດດຂອງ**<u>ການປະກາດ (ການສັ່ງສອນ)</u>**

**ໂຣມ 1:15–16**

***ໂຣມ 1:15–16***
*15 ເພາະເຫດນັ້ນ, ເຮົາຮີບຮ້ອນທີ່ຈະປະກາດຂ່າວປະເສີດແກ່ເຈົ້າທັງຫລາຍທີ່ຢູ່ໃນກຸງໂຣມເໝືອນກັນ.*
*16 ເພາະເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນຣິດເດດຂອງພະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ, ພວກຢິວກ່ອນ ແລະ ພວກຕ່າງຊາດດ້ວຍ.*

**1ໂກຣິນໂທ 1:17–24**

6. ລິດເດດຂອງ**<u>ຄຳພະຍານ</u>** – "ການເປັນພະຍານ"

**ພະນິມິດ 12:11**

***ພະນິມິດ 12:11***
***11** ເຂົາເຫລົ່ານັ້ນໄດ້ໄຊຊະນະພະຍານາກດ້ວຍພະໂລຫິດຂອງພະເມສານ້ອຍ ແລະ ເພາະຄຳພະຍານຂອງເຂົາເອງ ເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່ເສຍດາຍຊີວິດຂອງຕົນ.*

7. ລິດເດດຂອງ**<u>ການຖືສິນອົດ</u>** **ມັດທາຍ 6:16–18; 9:14–15**

ກ) ເພື່ອຮັບລິດເດດໃນການປະຕິບັດພັນທະກິດ **ລູກາ 4:12, 14**

ຂ) ເພື່ອການຊົງເປີດເຜີຍສ່ວນບຸກຄົນ **ລູກາ 2:36–38**

ຄ) ເພື່ອການຊົງເອີ້ນ ແລະການສົ່ງອອກໄປເຮັດພັນທະກິດ **ກິດຈະການ 13:1–4**

ງ) ເພື່ອໄຊຊະນະເໜືອເນື້ອໜັງ **ເພງສັນລະເສີນ 35:13**

**ຄາລາເຕຍ 5:17** ເປັນກຳລັງ ລິດເດດທີ່ຕໍ່ສູ້ກັບຕັນຫາຂອງເນື້ອໜັງ

ຈ) ສົງຄາມຝ່າຍວິນຍານ

**ເອຊາຢາ 58:6** "ການຖືສິນອົດເຂົ້າແບບທີ່ເຮົາຕ້ອງການແມ່ນດັ່ງນີ້:

**1ຊາມູເອນ 7:3–10** ເອົາພະເຈົ້າອົງອື່ນອອກໄປ, ຖືສິນອົດ, ອະທິຖານອ້ອນວອນ, ຈຶ່ງເອົາຊະນະສັດຕູໄດ້.

**2ຂ່າວຄາວ 20**

**ມັດທາຍ 17:14–21** *"ແຕ່ຜີແນວນີ້ບໍ່ເຄີຍຖືກຂັບໄລ່ອອກ ເວັ້ນແຕ່ການອ້ອນວອນ ແລະ ການຖືສິນອົດອາຫານ"*

GCI

# VI. ພາກປະຕິບັດ - ສົງຄາມຝ່າຍວິນຍານ

**ຈົ່ງທູນຂໍຄວາມສາມາດໃນການເບິ່ງເຫັນຝ່າຍວິນຍານຈາກອົງພະຜູ້ເປັນເຈົ້າ.**

1. ມີຫຍັງຜິດປົກກະຕິກັບບ່ອນນີ້?

2. ເຮັດແນວໃດມັນຈຶ່ງເປັນແບບນີ້?

3. ຈະເຮັດຫຍັງໄດ້ແດ່?
   ເຊັ່ນ: ໂຢຊວຍ - ການເຂົ້າຍຶດແຕ່ລະເມືອງນັ້ນ ເພິ່ນຈະມີແຜນການທີ່ບໍ່ຄືກັນ.

4. ນິຍາມຂອງຄຳວ່າ "ເປີດໃຫ້ເຂົ້າ" ໝາຍເຖິງການປ່ອຍໃຫ້ຊາຕານໄດ້ເຂົ້າໄປຕັ້ງຄ້າຍອັນເຂັ້ມແຂງພາຍໃນ.

   ບາບຫຍັງ? ຜິດບາບເຫຼົ່ານີ້ແມ່ນການປ່ອຍໃຫ້ຊາຕານໄດ້ເຂົ້າໄປຄອບຄຸມ "ປະຕູເມືອງ"

5. ວິທີການຊອກຫາການຜິດບາບຕ່າງໆ

   ກ) ເປັນຫຍັງເມືອງນີ້ຈຶ່ງຖືກສ້າງຕັ້ງຂຶ້ນ?

   ຂ) ເມືອງນີ້ ໄດ້ຊື່ນີ້ມາໄດ້ແນວໃດ (ຊື່ຂອງເມືອງໄດ້ມາແນວໃດ)?

   ຄ) ກຸ່ມຄົນທຳອິດທີ່ມາອາໃສໃນບໍລິເວນນີ້ ແມ່ນໃຜ?

   ງ) ແລ້ວເກີດຫຍັງຂຶ້ນກັບພວກເຂົາ?

   ຈ) ເກີດມີການສັ່ງລາດບັງຫລວງອັນໃດໃນລັດຖະບານນີ້ບໍ?

   ສ) ມີຄຳຂວັນ ຫລື ສະຕິໃດໆບໍ?

   ຊ) ເມືອງນີ້ຖືກສ້າງຕັ້ງຂຶ້ນເທິງຫລັກການຫຍັງແດ່?

   ຍ) ມີຫລັກຖານໃດບໍທີ່ອ້າງອີງເຖິງການລ້ລວງທາງສາສະໜາ?

   ດ) ຄາມຈິບຫາຍຕ່າງໆ (ການທຳລາຍ) ຝ່າຍຮ່າງກາຍ.

   ຕ) ສຶກສາເບິ່ງປຶດເພງ, ວັດທະນະທຳ, ສະຖາປັດຍະກຳ, ສິນລະປະ.

6. ການຜິດບາບນີ້ ຕ້ອງມີການກັບໃຈແບບພ້ອມພຽງກັນ (ແບບພ້ອມໃຈກັນ, ຮ່ວມມືກັນ). ຕ້ອງມີຜູ້ອະທິຖານອ້ອນວອນມາຢືນຢູ່ໃນຊ່ອງວ່າງນີ້ເພື່ອເມືອງຂອງຕົນ.

ກ) **ດານີເອນ 9:5**

ຂ) **ເນເຫມີຢາ 1:7**

ຄ) **ເອສະຣາ 9:7**

ພວກເຮົາເອງກໍເປັນທູດສຳລັບພື້ນທີ່ຂອງພວກເຮົາ – ເຂດປົກຄອງ.

**ໂຢຮັນ 20:23;** **2ໂກຣິນໂທ 5:20**

7. ຈົ່ງໂຈມຕີຄ້າຍອັນເຂັ້ມແຂງນີ້ໃນທາງທີ່ກົງກັນຂ້າມ / ຜົນຂອງພະວິນຍານຂອງພະເຈົ້າ.

**ໂຣມ 12: 21** *". . . ແຕ່ຈົ່ງຊະນະຄວາມຊົ່ວດ້ວຍຄວາມດີ."*
ເຊັ່ນ: ເອົາຊະນະຄວາມໂລບ ດ້ວຍການໃຫ້.
ເອົາຊະນະຄວາມອວດ ດ້ວຍການຖ່ອມຕົວ.

8. ການຈັດເວລາ ແມ່ນສິ່ງທີ່ສຳຄັນ **ໂຢຮັນ 17:1**

ກ) ຈັດທີມ ລ່ວງໜ້າເພື່ອອະທິຖານ **ລູກາ 10:1, 18–20**

ຂ) " " ເພື່ອການຖືສິນອົດ

ຄ) " " ເພື່ອການນຳໃຊ້ພະແສງຂອງພະວິນຍານ.

ສັ່ງຜູກມັດ / ສັ່ງແກ້ **ລູກາ 11:20-22**

ງ) ຜູ້ນຳຕ້ອງສອນຄົນຂອງຕົນເລື່ອງສົງຄາມຝ່າຍວິນຍານ

ຈ) ອາວຸດຕ່າງໆໃນການຮັບເສິກຂອງພວກເຮົານັ້ນ ບໍ່ແມ່ນອາວຸດຝ່າຍໂລກນີ້
**2ໂກຣິນໂທ 10:4**

9. ຈົ່ງນຳໃຊ້ພະແສງຂອງພະວິນຍານ

ກ) ອະທິຖານຂໍການປົກປັກຮັກສາແຕ່ລະຄົນພາຍໃນທີມ ແລະ ສະມາຊິກໃນຄອບຄົວ.

ໃຫ້ອ່ານ **ເພງສັນລະເສີນ 91** ຄຸເຂົ່າ ແລະ ຖ່ອມຕົວເອງລົງ. ຄວາມຮູ້(ສະຕິປັນ ຍາ)ບໍ່ໄດ້ມີອຳນາດ ຫລື ລິດເດດຫຍັງໃນເຮົາ, ແຕ່ອຳນາດ ແລະ ລິດເດດທັງ ປວງນັ້ນມີຢູ່ໃນພະນາມຂອງພະອົງ.

ຂ) ການສາລະພາບ ແລະ ການຍອມຮັບຕໍ່ການບາບຕ່າງໆຂອງປະຊາຊົນ, ລັດຖະ ບານ, ທຸລະກິດຕ່າງໆ ແລະ ອື່ນໆ.

GCI

ຄ) ຜູ້ນໍາທ້ອງຖິ່ນທີ່ມີການເຈີມອັນເຂັ້ມແຂງຕ້ອງນໍາໄປດ້ວຍຄວາມເຊື່ອ ຕໍ່ສູ້ກັບວິນ ຍານທີ່ປົກຄຸມເຂດນັ້ນໆ.

ສັ່ງຜູກມັດມັນ - ຢຸດມັນ - ທໍາລາຍອໍານາດຂອງມັນ. ສັ່ງໃຫ້ມັນເຊົາ, ໜີໄປ ແລະ ແຕກຜ່າຍໄປ. ສັ່ງແກ້ມັດ - ປົດປ່ອຍ - ປ່ອຍສິ່ງທີ່ຖືກກັນຂ້າມອອກມາ ຫລື ຂໍພະວິນຍານຂອງພະເຈົ້າເຕີມເຕັມຊ່ອງທີ່ວ່າງເປົ່ານັ້ນໆ.

ມັດທາຍ 12:44–45

ງ) ໃຫ້ທຸກໆຄົນຢືນນໍາກັນ ເປັນນໍ້າໜຶ່ງໃຈດຽວກັນ ເປັນອັນໜຶ່ງອັນດຽວກັນ ມີຄວາມ ເຫັນພ້ອມກັນ.

# ການປະກາດ

**ພະບັດຍັດສອງ 32:8** ອົງພະຜູ້ເປັນເຈົ້າໄດ້ຊົງມອບດິນແດນນີ້ໃຫ້ແກ່ທ່ານແລ້ວ! ດັ່ງທີ່ພະອົງໄດ້ມອບຄານາອານໃຫ້ແກ່ອິດສະລາເອນນັ້ນ. ແຕ່**ທ່ານຕ້ອງສູ້** ເພື່ອໃຫ້ໄດ້ແຜ່ນດິນນັ້ນມາຄອບຄອງ!

**ເພງສັນລະເສີນ 2:8** ຈົ່ງຂໍນໍາພະອົງ. ອັນນີ້ແມ່ນແຜ່ນດິນແຫ່ງພະສັນຍາຂອງທ່ານ

**ຈົດເຊັນບັນຊີ 13–14** ຈົ່ງກ່າວອອກມາແຕ່ຄໍາລາຍງານທີ່ດີໆ!

**ໂຢບ 22:28** ຈົ່ງປ່າວປະກາດອອກໄປ!

**ມາລະໂກ 11:22–24** ທ່ານຈະເວົ້າຢູ່ກັບໃຜກໍຕາມ

**ເຮັບເຣີ 10:23** ຈົ່ງຍຶດໝັ້ນໃນຄວາມຫວັງທີ່ພວກເຮົາປະກາດຕົວວ່າໄດ້ຮັບແລ້ວນັ້ນ ຢ່າໃຫ້ເຄື່ອນໄຫວ ເພາະວ່າ ພະອົງຜູ້ຊົງປະທານພະສັນຍານັ້ນ ກໍຊົງສັດຊື່.

**ໂຣມ 4:17** ຈົ່ງຮ້ອງສິ່ງທີ່ບໍ່ມີຢູ່ນັ້ນໃຫ້ມີຂຶ້ນ.

ກໍາແພງເລື່ອງການເຮັດບຸນ/ປະເພນີ ເພື່ອຈະໄດ້ພົ້ນນັ້ນ ຕ້ອງຖືກທໍາລາຍລົງ!!!

ສ່ວນກໍາແພງແຫ່ງການຊົງໂຜດໃຫ້ພົ້ນຈະຕ້ອງຖືກຍົກສູງຂຶ້ນ!!

**ເອຊາຢາ 60:18** ອົງກະສັດແຫ່ງສະຫງ່າລາສີຈະສະເດັດມາ!!!

__**ລາຍຊື່ເອກະສານອ້າງອີງ:**__

1. C. Peter Wagner, *Breaking Strongholds In Your City* Regal Books)
2. Dean Sherman, *Spiritual Warfare* (YWAM Publishing)